# THE HEIDELBERG CATECHISM

# ຄຳຖາມ ຄຳຕອບ ຂອງ ຮີແດນເບີກ

## ວັນແຫ່ງພຣະເຈົ້ານີ້ທີ 1.

*ຖາມ:* 1. ແມ່ນຫຍັງເປັນສິ່ງທີ່ສາມາດເລົ້າໂລມໃຈຂອງທ່ານ ໃນຍາມມີຊີວິດ ຫຼືຕາຍໄປ? 4.001

*ຕອບ:* ເປັນສິ່ງທີ່ຂ້າພະເຈົ້າໄດ້ມອບຖວາຍໃຫ້ໃນດ້ານຮ່າງກາຍແລະວິນຍານ, ຄືໃນການທີ່ຈະມີມີຊີວິດຫຼືຕາຍໄປ ຂ້າພະເຈົ້າຈະມີຄວາມໝັ້ນໃຈໃນຄວາມເຊື່ອຂອງຂ້າພະເຈົ້າຕໍ່ການຊົງໄຖ່ໃຫ້ພົ້ນຂອງພຣະເຢຊູຄຣິສ, ຜູ້ຊຶ່ງໃຊ້ໂລຫິດຂອງພຣະອົງເອງ ຊຳຣະລ້າງຄວາມ ຜິດບາບທັງໝົດຂອງຂ້າພະເຈົ້າ ແລະ ໃຫ້ຂ້າພະເຈົ້າເປັນອິສະຣະຈາກການຄອບຄອງຂອງພີມານ, ພຣະອົງຊົງປົກປັກຮັກສາ ຂ້າພະເຈົ້າເປັນຢ່າງດີທີ່ສຸດ ຈົນໄດ້ສັນຍາວ່າຫາກພຣະບິດາໃນສວັນບໍ່ພໍພຣະທັຍ ແມ້ແຕ່ຜົມເສັ້ນນຶ່ງ ຂອງຂ້າພະເຈົ້າກໍຈະບໍ່ລົ່ນຈາກຫົວ, ທຸກສິ່ງຢ່າງຕ້ອງເໝາະສົມກັບຈຸດປະສົງຂອງພຣະອົງເພື່ອຄວາມພົ້ນຂອງ ຂ້າພະເຈົ້າ. ດັ່ງນັ້ນ, ໂດຍພຣະວິນຍານບໍຣິສຸດຂອງພຣະອົງ, ພຣະອົງຊົງໃຫ້ຄວາມໝັ້ນໃຈໃນການມີຊີວິດອັນ ຕລອດເປັນນິດແກ່ຂ້າພະເຈົ້າ, ແລະເຮັດໃຫ້ຂ້າພະເຈົ້າມີ ຄວາມໝັ້ນອີກໝັ້ນໃຈຕໍ່ພຣະອົງ ແລະຕຽມພ້ອມທີ່ຈະ ດຳຣົງຊີວິດຢູ່ກັບພຣະອົງນັບແຕ່ເວລານີ້ເປັນຕົ້ນໄປ.

*ຖາມ:* 2. ມີສິ່ງໃດແດ່ທີ່ທ່ານຕ້ອງຮູ້ວ່າທ່ານຈະດຳຣົງຊີວິດແລະຕາຍຢູ່ໃນການເລົ້າໂລມນີ້? 4.002

*ຕອບ:* ມີສາມຢ່າງ. ອັນທີ1 ຄືຄວາມບາບທີ່ມາກມາຍ ແລະຄວາມຊົ່ວຮ້າຍຂອງຂ້າພະເຈົ້າ. ອັນທີ 2 ຄືສິ່ງທີ່ເຮັດໃຫ້ຂ້າພະເຈົ້າເປັນອິສະຣະຈາກຄວາມຜິດບາບແລະການຊົ່ວຮ້າຍຂອງຕົນເອງ. ອັນທີ 3 ຄື ບຸນຄຸນທີ່ລົ້ນເຫຼືອຂອງພຣະເຈົ້າທີ່ ຂ້າພະເຈົ້າເປັນໜີ້ພຣະອົງຕໍ່ການຊົງໄຖ່ໃຫ້ພົ້ນນັ້ນ.

## ພາກ 1

## ຄວາມທຸຂເວທະນາຂອງມະນຸດ

## ວັນແຫ່ງພຣະເຈົ້ານີ້ທີ 2.

*ຖາມ:* 3. ທ່ານຮຽນຮູ້ເລື້ອງຄວາມຜິດບາບແລະຜົນແຫ່ງຄວາມຊົ່ວຮ້າຍຂອງທ່ານຈາກໃສ? 4.003

*ຕອບ:* ຮຽນຮູ້ຈາກພຣະບັນຍັດຂອງພຣະເຈົ້າ

*ຖາມ:* 4. ພຣະບັນຍັດຂອງພຣະເຈົ້າຮຽກຮ້ອງໃຫ້ເຮົາຕ້ອງເຮັດແນວໃດ? 4.004

*ຕອບ:* ພຣະເຢຊູຄຣິສໄດ້ຊົງສອນເລື້ອງນີ້ໂດຍຫຍໍ້ຢູ່ໃນພຣະທັມ ມັດທາຍ 22:37-40: "ຈົ່ງຮັກອົງພຣະຜູ້ເປັນເຈົ້າດ້ວຍ ສຸດຈິດ ສຸດໃຈ ແລະດ້ວຍສຸດກຳລັງຄວາມຄິດຂອງທ່ານ. ນັ້ນແຫຼະເປັນພຣະບັນຍັດຂໍ້ໃຫຍ່ ແລະຂໍ້ຕົ້ນ. ຂໍ້ທີສອງກໍເໝືອນກັນ ຄື ຈົ່ງຮັກເພື່ອນບ້ານເໝືອນຮັກ ຕົນເອງ. ພຣະບັນຍັດແລະຖ້ອຍຄຳຂອງຜູ້ປະກາດພຣະທັມ ທັງໝົດ ກໍຂຶ້ນຢູ່ກັບພຣະບັນຍັດ ສອງຂໍ້ນີ້." (ທຽບ ລູກາ 10:25.)

*ຖາມ:* 5. ທ່ານສາມາດປະຕິບັດຕາມສິ່ງທັງໝົດນີ້ໄດ້ທຸກຂໍ້ບໍ? 4.005
*ຕອບ:* ບໍ່, ໂດຍອີງໃສ່ທຳມະຊາດແລ້ວ ຂ້າພະເຈົ້າມີແນວໂນ້ມໄປທາງການກຽດຊັງພຣະເຈົ້າແລະເພື່ອນບ້ານຕົນ

## ວັນແຫ່ງພຣະເຈົ້າມື້ທ 3.

*ຖາມ:* 6. ພຣະເຈົ້າຊົງສ້າງມະນຸດໃຫ້ເປັນມານບໍ ແລະເຮັດໃຫ້ມະນຸດຕ້ອງມີສະພາບແບບນີ້ເລີຍບໍ? 4.006
*ຕອບ:* ບໍ່. ກົງກັນຂ້າມ, ພຣະເຈົ້າໄດ້ຊົງສ້າງມະນຸດໃຫ້ເປັນຄົນດີ ແລະເປັນແບບພຣະສາຍາຂອງພຣະອົງ, ຊຶ່ງໃນຄວາມຊອບທັມແລະຄວາມບໍຣິສຸດຄົບຖ້ວນນັ້ນ, ເພື່ອພວກເຂົາຈະໄດ້ຮູ້ຈັກພຣະເຈົ້າຜູ້ຊົງສ້າງພວກເຂົາ, ຮັກພຣະອົງຢ່າງສຸດໃຈ, ດຳຣົງຊີວິດຢູ່ໃນພຣະພອນຂອງພຣະອົງຕລອດໄປ, ສັຣເສີນພຣະອົງແລະຖວາຍກຽດແດ່ພຣະອົງ.

*ຖາມ:* 7. ຖ້າຢ່າງນັ້ນ ທຳມະຊາດແບບນີ້ຂອງມະນຸດເກີດມາຈາກໃສ? 4.007
*ຕອບ:* ເກີດມາຈາກການເຊື່ອນໂຊມ ແລະການບໍ່ເຊື່ອຟັງຂອງພໍ່ເຖົ້າແມ່ເດີມຂອງເຮົາ ຄືອາດາມກັບເອວາ ທີ່ຢູ່ໃນສວນເອເດັນ. ສິ່ງນີ້ໄດ້ກາຍເປັນການເບື່ອເມົາມະນຸດ ເຮັດໃຫ້ພວກເຮົາຕ້ອງຮັບກັມ ແລະເກີດມາໃນທ່າມກາງຄວາມຜິດບາບ.

*ຖາມ:* 8. ແຕ່ພວກເຮົາເສັຽສະຕິ ຈົນວ່າບໍ່ສາມາດທຳດີ ແລະມີແນວໂນ້ມໄປແຕ່ທາງທຳຊົ່ວບໍ? 4.008
*ຕອບ:* ແມ່ນແລ້ວ, ນອກເສັຽຈາກວ່າ ເຮົາຈະຕ້ອງເກີດໃໝ່ໂດຍພຣະວິນຍານແຫ່ງພຣະເຈົ້າເທົ່ານັ້ນ.

## ວັນແຫ່ງພຣະເຈົ້າ ມື້ທີ 4

*ຖາມ:* 9. ບໍ່ແມ່ນພຣະເຈົ້າບໍ່ຍຸຕິທັມບໍທີ່ຮຽກຮ້ອງໃຫ້ມະນຸດປະຕິບັດພຣະບັນຍັດທັ້ງທີ່ບໍ່ສາມາດເຮັດໄດ້? 4.009
*ຕອບ:* ບໍ່ແມ່ນດອກ, ເພາະວ່າພຣະເຈົ້າສ້າງມະນຸດທີ່ສາມາດທຳໄດ້. ແຕ່ວ່າ ມະນຸດ, ໂດຍການຍົວະເຍົ້າຂອງມານ, ດ້ວຍຄວາມຕັ້ງໃຈທີ່ຈະບໍ່ເຊື່ອຟັງ, ໄດ້ສໍ້ກົງຕົວເອງ ແລະພ້ອມທັງເຊື້ອສາຍຂອງເຂົາ ໃຫ້ອອກຈາກຂອງປະທານຊຶ່ງພຣະເຈົ້າໄດ້ຊົງໂຜດໃຫ້ນີ້

*ຖາມ:* 10. ພຣະເຈົ້າຈະປະປ່ອຍໃຫ້ມະນຸດທຳການບໍ່ເຊື່ອຟັງ ແລະຮັບການເສັຽຫາຍແບບນັ້ນເລີຍບໍ? 4.010
*ຕອບ:* ບໍ່ແມ່ນແນ່ນອນ, ຄວາມໂກດຮ້າຍຂອງພຣະເຈົ້ານັ້ນ ໄດ້ລົງມາຈາກສວັນ ຊຶ່ງຕໍ່ສູ້ກັບຄວາມບາບຂອງພວກເຮົາແຕ່ເວລາຍັງບໍ່ທັນເກີດ ແລະທີ່ມີຢູ່ໃນປັດຈຸບັນ, ແລະພຣະອົງຈະຕ້ອງລົງໂລດສິ່ງດັ່ງກ່າວດ້ວຍການ ພິພາກສາອັນຍຸຕິທັມຂອງພຣະອົງ ດັ່ງທີ່ພຣະອົງໄດ້ຊົງປະກາດວ່າ "ວິບັດແກ່ຜູ້ທີ່ເດີນຕາມທຸກສິ່ງທີ່ໄດ້ ຂຽນໄວ້ປື້ມພຣະບັນຍັດ"

*ຖາມ:* 11. ແຕ່ວ່າ ພຣະເຈົ້າຊົງເປັນພຣະເຈົ້າແຫ່ງຄວາມເມດຕາບໍ່ແມ່ນບໍ? 4.011
*ຕອບ:* ພຣະເຈົ້າ ເປັນພຣະເຈົ້າຜູ້ເມດຕາກະຣຸນາ, ແຕ່ພຣະອົງກໍຊົງເປັນຜູ້ຊອບທັມເຊັ່ນກັນ. ແມ່ນຄວາມຊອບທັມ

ຂອງພຣະອົງນັ້ນເອງທີ່ຮຽກຮ້ອງໃຫ້ ຄວາມຜິດບາບທີ່ຕໍ່ຕ້ານກັບຣິດອຳນາດຂອງພຣະອົງ ຈະຕ້ອງຖືກລົງໂທດຢ່າງຮ້າຍແຮງ ຊຶ່ງເປັນການ ລົງໂທດທັ້ງທາງດ້ານຮ່າງກາຍ ແລະວິນຍານຕລອດໄປເປັນນິດ.

# ພາກ 2

# ການຊົງໄຖ່ໃຫ້ພົ້ນຂອງມະນຸດ

## ວັນແຫ່ງພຣະເຈົ້າ ນີ້ທີ5

*ຖາມ:* 12. ຖ້າວ່າພຣະເຈົ້າຊົງເປັນຜູ້ພິພາກສາທີ່ຍຸຕິທັມ ພວກເຮົາສົມຄວນໄດ້ຮັບການລົງໂທດ 4.012
ແບບຊົ່ວຄາວແລະຕລອດໄປເປັນນິດ, ພວກເຮົາຈະຫຼີກໜີຈາກການລົງໂທດນີ້ ແລ້ວຈະກັບເຂົ້າສູ່ພຣະຄຸນແລະຄືນດີກັນກັບພຣະອົງໄດ້ແບບໃດ ?

*ຕອບ:* ຈຸດປະສົງຂອງພຣະເຈົ້າ ຄືຕ້ອງໃຫ້ຄວາມຊອບທັມຂອງພຣະອົງຖືກປະຕິບັດ, ດັ່ງນັ້ນ, ການໃຊ້ຄືນທັງໝົດຈະຕ້ອງເກີດຂຶ້ນເພື່ອໃຊ້ແທນຄວາມຍຸຕິທັມຂອງພຣະອົງ, ໂດຍທາງພວກເຮົາເອງ ຫຼືໂດຍຄົນອື່ນ.

*ຖາມ:* 13. ເຮົາຈະໃຊ້ຄືນສິ່ງນີ້ດ້ວຍຕົວເອງໄດ້ບໍ ? 4.013

*ຕອບ:* ເປັນໄປບໍ່ໄດ້. ກົງກັນຂ້າມ ເຮົາມີແຕ່ຈະເພີ່ມໂທດກັມແກ່ຕົວເອງທຸກວັນຊ້ຳອີກ.

*ຖາມ:* 14. ຄວາມບໍຣິສຸດຂອງສິ່ງໃດສິ່ງນຶ່ງທີ່ຖືກສ້າງມານັ້ນ ຊ່ວຍໃຊ້ຄ່າແທນເຮົາໄດ້ບໍ ? 4.014

*ຕອບ:* ບໍ່. ກ່ອນອື່ນໝົດ, ພຣະເຈົ້າບໍ່ຕ້ອງການຈະລົງໂທດສິ່ງອື່ນທີ່ຊົງສ້າງມານັ້ນເພື່ອເປັນຄ່າໄຖ່ຖອນໃຫ້ມະນຸດ. ຍິ່ງກວ່ານັ້ນ, ບໍ່ມີສິ່ງສິ່ງທີ່ຊົງສ້າງອັນໃດ ຈະສາມາດແບກຫາບຄວາມໂກດຮ້າຍຂອງພຣະເຈົ້າທີ່ມີຕໍ່ຄວາມຜິດບາບຂອງມະນຸດ ແລະສາມາດໄຖ່ເອົາມະນຸດອອກຈາກສິ່ງດັ່ງກ່າວໄດ້.

*ຖາມ:* 15. ຖ້າດັ່ງນັ້ນ, ໃຜຈະເປັນຄົນໄກ່ເກັ່ຽ ແລະເປັນຜູ້ໄຖ່ ທີ່ເຮົາຄວນຊອກຫາ ? 4.015

*ຕອບ:* ມີມະນຸດຄົນດຽວທີ່ເປັນຄວາມຈິງ ແລະຊອບທັມ ແລະເປັນຜູ້ທີ່ມີຣິດອຳນາດຫຼາຍກວ່າສິ່ງທີ່ຊົງສ້າງມານັ້ນທັງໝົດ ເປັນຜູ້ດຽວທີ່ມາເກີດເປັນມະນຸດ ແລະໃນເວລາດຽວກັນ, ກໍຊົງເປັນພຣະເຈົ້າດ້ວຍ.

## ວັນແຫ່ງພຣະເຈົ້າ ນີ້ທີ6

*ຖາມ:* 16. ເປັນຫຍັງ ທ່ານຈຶ່ງເປັນຄວາມຈິງ ແລະເປັນຜູ້ຊອບທັມ ? 4.016

*ຕອບ:* ເພາະວ່າ ຄວາມຊອບທັມຂອງພຣະເຈົ້າ ໄດ້ຮຽກຮ້ອງວ່າ ມະນຸດຜູ້ທຳຄວາມຜິດບາບຕ້ອງແກ້ໄຂຊົດໃຊ້ຄວາມບາບນັ້ນຂອງຕົນ, ແຕ່ມະນຸດຜູ້ຊຶ່ງຕົວເອງເປັນຄົນຜິດບາບນັ້ນ ກັບບໍ່ສາມາດໃຊ້ແທນຄົນອື່ນໄດ້.

*ຖາມ:* 17. ເປັນຫຍັງ ພ້ອມດຽວກັນນັ້ນ, ທ່ານຈຶ່ງເປັນພຣະເຈົ້າ ? 4.017

*ຕອບ:* ເພື່ອວ່າ ດ້ວຍຣິດອຳນາດແຫ່ງພຣະເຈົ້າຂອງພຣະອົງ ພຣະອົງຈະສາມາດແບບຫາບເອົາຄວາມໂກດຮ້າຍຂອງພຣະເຈົ້າ, ແລະຊ່ອຍກູ້ພວກເຮົາ ແລະສ້າງຄວາມຊອບທັມ ແລະໃຫ້ຊີວິດແກ່ພວກເຮົາ.

*ຖາມ:* 18. ໃຜຄືຜູ້ໄກ່ເກັ່ຽນີ້ ໃຜທີ່ໃນເວລາດຽວກັນກໍເປັນພຣະເຈົ້າດ້ວຍ ແລະເປັນຄວາມຈິງ ແລະເປັນມະນຸດຜູ້ດີເລີດນັ້ນ ? 4.018

*ຕອບ:* ພຣະເຢຊູຄຣິສ, ຜູ້ຊຶ່ງໄດ້ພຣະເຈົ້າໄດ້ຊົງປະທານໃຫ້ແກ່ເຮົາຢ່າງບໍ່ຄິດຄ່າ, ໄດ້ຊົງສຳເຣັດການໄຖ່ ແລະຄວາມຊອບທັມ

*ຖາມ:* 19. ທ່ານຮູ້ຈັກສິ່ງນີ້ໃນເວລາໃດ ? 4.019

*ຕອບ:* ຮູ້ຈາກພຣະຄຳພີອັນສັກສິດ, ຊຶ່ງພຣະເຈົ້າໄດ້ຊົງສະແດງພຣະອົງເອງໃນເບື້ອງຕົ້ນທີ່ສວນເອເດັນ, ຫຼັງຈາກນັ້ນກໍໄດ້ ຖືກປະກາດໂດຍພວກຜູ້ປົກຄອງ ແລະຜູ້ທຳນວຍ ແລະການບອກເຫດການລ່ວງໜ້າໂດຍຜ່ານກະຖວາຍບູຊາ ແລະພິທີການອື່ນໆ ໃນສມັຍພຣະສັນຍາເດີມ, ແລະໃນທີ່ສຸດກໍປາກົດພົນເປັນຈິງໃນພຣະບຸດອົງດຽວຂອງພຣະອົງ.

## ວັນແຫ່ງພຣະເຈົ້າ ມື້ທີ 7

*ຖາມ:* 20. ມະນຸດທຸກຄົນຈະໄດ້ພົ້ນຍ້ອນພຣະຄຣິສ ເໝືອນດັ່ງທີ່ພວກເຂົາໄດ້ຫຼົງທາງຍ້ອນອາດາມນັ້ນບໍ ?4.020

*ຕອບ:* ບໍ່. ມີແຕ່ພວກທີ່ເຂົ້າຮ່ວມກັບພຣະອົງ ແລະຍອມຮັບພຣະອົງ ໂດຍທາງຄວາມເຊື່ອເທົ່ານັ້ນ ຈຶ່ງໄດ້ປະໂຫຍດຈາກສິ່ງນີ້

*ຖາມ:* 21. ຄວາມເຊື່ອທີ່ແທ້ຈິງເປັນຄືແນວໃດ ? 4.021

*ຕອບ:* ບໍ່ແມ່ນພຽງແຕ່ຍ້ອນມີຄວາມຮັບຮູ້ບາງຢ່າງເທົ່ານັ້ນທີ່ເຮັດໃຫ້ຂ້າພະເຈົ້າຍອມຮັບວ່າເປັນຄວາມຈິງໃນທຸກສິ່ງທີ່ພຣະເຈົ້າໄດ້ສະແດງພຣະອົງເອງໃຫ້ເຮົາຮູ້ໃນພຣະທັມຂອງພຣະອົງ, ແຕ່ຕ້ອງມີການຊົງນຳຈາກພຣະວິນຍານບໍຣິສຸດທີ່ມີໃນຂ້າພະເຈົ້າ, ໂດຍທາງພຣະທັມຂອງພຣະອົງ ຊຶ່ງບໍ່ແມ່ນຈະມີແຕ່ຕໍ່ຄົນອື່ນແຕ່ຕໍ່ຂ້າພະເຈົ້າ ພຣະອົງໄດ້ຊົງອະພັຍໂທດບາບໃຫ້, ໃຫ້ມີຄວາມຊອບທັມຕລອດເປັນນິດ ພ້ອມທັງໄດ້ພົ້ນໂດຍອາສັຍພຣະຄຸນ ໃນວຽກງານການຊົງໄຖ່ຂອງພຣະຄຣິສ.

*ຖາມ:* 22. ຖ້າດັ່ງນັ້ນ, ຄຣິສຕຽນຕ້ອງເຊື່ອແນວໃດແດ່ ? 4.022

*ຕອບ:* ທຸກສິ່ງທີ່ສັນຍາກັບພວກເຮົາ ໃນພຣະຄຳພີ, ບົດສະລູບທີ່ສອນພວກເຮົາໃນຫຼັກຄວາມເຊື່ອຕາມເຫຼົ່າອັຄະສາວົກ, ການຮັບຮູ້ ຫົວຂໍ້ຫຼັກຄວາມເຊື່ອສາກົນ.

*ຖາມ:* 23. ຫົວຂໍ້ທັງຫຼາຍນີ້ມີຄືແນວໃດ ? 4.023

*ຕອບ:* ຂ້າພະເຈົ້າເຊື່ອໃນພຣະບິດາເຈົ້າ ຜູ້ຊົງສ້າງຟ້າສວັນແລະແຜ່ນດິນໂລກ; ແລະໃນພຣະເຢຊູຄຣິສ, ພຣະຣາຊບຸດອົງດຽວຂອງພຣະອົງ, ຜູ້ຊົງເປັນພຣະເຈົ້າຂອງພວກເຮົາທັງຫຼາຍ; ພຣະອົງໄດ້ຊົງມາປະສູດນຳນາງມາຣີອາ ຍິງພົມມະຈາຣີ ດ້ວຍຣິດເດດແຫ່ງພຣະວິນຍານບໍຣິສຸດ; ຊົງຖືກທົນທຸກທໍຣະມານດ້ວຍ ປີລາດຜູ້ປົກຄອງ, ຊົງຖືກຄຶງໄວ້ທີ່ໄມ້ກາງແຂນ, ຊົງສິ້ນພຣະຊົນ; ສະເດັດລົງສູ່ແດນມໍຣະນາ; ໃນວັນຖ້ວນສາມ

ພຣະອົງຊົງຄືນພຣະຊົນ, ສະເດັດສູ່ສວັນ, ປະທັບຢູ່ກ້ຳຂວາ ຂອງພຣະຣາຊບິດາເຈົ້າ. ຈາກທີ່ນັ້ນແຫຼະ ພຣະອົງຈະສະເດັດມາພິພາກສາທັງຄົນເປັນແລະຄົນຕາຍ. ຂ້າພະເຈົ້າເຊື່ອໃນອົງພຣະວິຍານບໍຣິສຸດ, ໃນຄຣິສຕະຈັກສາກົນອັນບໍຣິສຸດ, ໃນຄວາມສາມັກຄີທັມຣະຫວ່າງໄພ່ພົນ ທັງປວງຂອງພຣະເຈົ້າ, ໃນການອະພັຍໂທດບາບ, ໃນການໂຜດໃຫ້ຮ່າງກາຍຄືນມາຈາກຕາຍ, ແລະໃນການໃຫ້ມີຊີວິດອັນຕລອດໄປເປັນນິດ.

## ວັນແຫ່ງພຣະເຈົ້າ ນີ້ທີ 8

*ຖາມ:* 24. ຫົວຂໍ້ເຫຼົ່ານີ້ ໄດ້ແບ່ງອອກແບບໃດ? 4.024

*ຕອບ:* ແບ່ງເປັນສາມພາກ: ພາກທີ່ນຶ່ງ ກ່ຽວກັບພຣະເຈົ້າພຣະບິດາ ແລະການຊົງສ້າງ, ພາກທີສອງ ຄືພຣະເຈົ້າພຣະບຸດ ແລະພຣະຜູ້ໄຖ່, ພາກທີສາມ ຄືພຣະເຈົ້າພຣະວິນຍານບໍຣິສຸດ ແລະການທຳໃຫ້ໝົດສິ້ນຄວາມບາບຂອງພວກເຮົາ.

*ຖາມ:* 25. ຖ້າມີພຣະເຈົ້າອົງສັກສິດພຽງອົງດຽວ ເປັນຫຍັງຈຶ່ງຕ້ອງເວົ້າເຖິງສາມອົງ ຄືພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດ? 4.025

*ຕອບ:* ເພາະວ່າພຣະເຈົ້າໄດ້ຊົງສະແດງພຣະອົງເອງໃນພຣະທັມຂອງພຣະອົງວ່າ ໃນສາມສິ່ງທີ່ແຕກຕ່າງກັນນີ້ແຫຼະ ຄືພຣະຜູ້ນັ້ນ ຄືຄວາມຈິງ ແລະພຣະເຈົ້າອົງມີຣັນດອນ.

# ພຣະເຈົ້າພຣະບິດາ

## ວັນແຫ່ງພຣະເຈົ້າ ນີ້ທີ 9

*ຖາມ:* 26. ທ່ານເຊື່ອແນວໃດ ໃນເວລາທີ່ທ່ານກ່າວວ່າ: "ຂ້າພະເຈົ້າເຊື່ອໃນພຣະເຈົ້າພຣະບິດາ ຜູ້ຊົງສ້າງຟ້າສວັນແລະແຜ່ນດິນໂລກ. 4.026

*ຕອບ:* ພຣະບິດາແຫ່ງພຣະເຢຊູຄຣິສເຈົ້າຂອງພວກເຮົາ, ຜູ້ຊຶ່ງສ້າງຟ້າສວັນແລະແຜ່ນດິນໂລກ ພ້ອມທັງທຸກສິ່ງທີ່ມີໃນນັ້ນ ໂດຍບໍ່ແມ່ນສ້າງຈາກສິ່ງໃດເລີຍ. ພຣະອົງໄດ້ຊົງເບິ່ງແຍງແລະປົກຄອງມັນດ້ວຍທີ່ປຶກສາ ແລະຜູ້ຈັດຫາທີ່ຖາວອນຂອງພຣະອົງ ນີ້ແມ່ນເພື່ອສວັດດີການຂອງພຣະຄຣິສ ຜູ້ເປັນພຣະບຸດຂອງພຣະອົງແລະເປັນພຣະເຈົ້າ ແລະພຣະບິດາຂອງຂ້າພະເຈົ້າ. ຂ້າພະເຈົ້າເຊື່ອແລະໄວ້ວາງໃຈໃນພຣະອົງ ໂດຍບໍ່ມີຂໍ້ສົງສັຍວ່າ ພຣະອົງຈະຕ້ອງຈັດສັນສິ່ງທີ່ຈຳເປັນສຳຣັບຮ່າງກາຍ ແລະຈິດວິນຍານຂອງຂ້າພະເຈົ້າ. ຍິ່ງໄປກວ່ານັ້ນ, ສິ່ງຊົ່ວຮ້າຍແນວໃດກໍຕາມ ທີ່ມາຫາຂ້າພະເຈົ້າຢູ່ໃນການດຳຣົງຊີວິດຢູ່ໃນໂລກ ທີ່ຊັບສົນນີ້, ພຣະອົງຈະຊົງເຫັນຄວາມດີຂອງຂ້າພະເຈົ້າ ຊຶ່ງພຣະອົງສາມາດທຳໄດ້, ເພາະພຣະອົງຊົງເປັນພຣະເຈົ້າຜູ້ຊົງຣິດ, ແລະຊົງທຳໄດ້ ໂດຍທີ່ຊົງເປັນພຣະບິດາຜູ້ຊື່ສັດນັ້ນ.

*ຖາມ:* 27. ທ່ານເຂົ້າໃຈແນວໃດກັບການຊົງຈັດຕຽມຂອງພຣະເຈົ້າ? 4.027

*ຕອບ:* ຄວາມສັກສິດ ແລະຣິດອຳນາດຕລອດການຂອງພຣະອົງ ພຣະອົງຊົງຈັດຕຽມທຸກຢ່າງໃຫ້,

ພຣະຫັດຖະກິດຂອງພຣະອົງ, ສວັນ ແລະແຜ່ນດິນໂລກ, ປົກຄອງທັງຜັກແລະຫຍ້າ, ຝົນແລະຄວາມແຫ້ງແລ້ງ, ປີທີ່ໄດ້ໝາກຜົນ ຫຼືບໍ່ໄດ້ໝາກຜົນ, ອາຫານ ແລະເຄື່ອງດື່ມ, ສຸຂພາບດີ ແລະການເຈັບປ່ວຍ, ຮັ່ງຫຼືທຸກ, ແລະສິ່ງອື່ນໆອີກ ໄດ້ມາຫາພວກເຮົາ ບໍ່ແມ່ນຍ້ອນໂຊກ ແຕ່ຍ້ອນພຣະອົງປະທານໃຫ້.

*ຖາມ:* 28. ທ່ານເຂົ້າໃຈໃນການຈັດຕຽມທ້າງທາຂອງປະທານຂອງພຣະເຈົ້າ 4.028

*ຕອບ:* ພວກເຮົາຮຽນຮູ້ວ່າ ພວກເຮົາຕ້ອງມີຄວາມອົດທົນຕໍ່ຄວາມລຳບາກ, ກະຕັນຍູຮູ້ຄຸນຢູ່ທ່າມກາງພຣະພອນ, ແລະໄວ້ວາງໃຈໃນພຣະເຈົ້າຂອງເຮົາ ແລະພຣະບິດາໃນອານາຄົດ, ໝັ້ນໃຈວ່າ ບໍ່ມີສິ່ງໃດຈະມາແຍກເຮົາອອກຈາກຄວາມຮັກ ຂອງພຣະອົງໄດ້ ເພາະສິ່ງທັງໝົດຢູ່ໃນກຳພຣະຫັດຂອງພຣະອົງ ຊຶ່ງຫາກພຣະອົງບໍ່ພໍພຣະທັຍ ຈະບໍ່ມີສິ່ງໃດສາມາດເຄື່ອນເໜັງໄດ້

## ພຣະເຈົ້າພຣະບຸດ

## ວັນແຫ່ງພຣະເຈົ້າ ມື້ທີ 11

*ຖາມ:* 29. ເປັນຫຍັງພຣະບຸດຂອງພຣະເຈົ້າຈຶ່ງມີຊື່ວ່າ ເຢຊູ, ຊຶ່ງແປວ່າ ພຣະຜູ້ຊ່ວຍໃຫ້ລອດ ? 4.029

*ຕອບ:* ເພາະວ່າພຣະອົງຊົງຊ່ວຍໃຫ້ພົ້ນພົ້ນຈາກຄວາມຜິດບາບຂອງເຮົາ, ແລະຍ້ອນຄວາມພົ້ນນີ້ ບໍ່ສາມາດຊອກຫາໄດ້ ໃນຜູ້ອື່ນ.

*ຖາມ:* 30. ພວກທີ່ຊອກຫາຄວາມພົ້ນດ້ວຍຕົນເອງ ແລະ ເປັນຄົນດີ ໂດຍອາສັຍສິ່ງສັກສິດ 4.030
ຈະຖືວ່າເປັນຜູ້ທີ່ເຊື່ອໃນພຣະເຢຊູຄຣິສອົງດຽວໄດ້ບໍ ?

*ຕອບ:* ບໍ່. ໂດຍການກະທຳດັ່ງກ່າວ ພວກເຂົາໄດ້ປະຕິເສດພຣະເຢຊູ ຊຶ່ງເປັນພຣະຜູ້ຊ່ວຍແລະຜູ້ໄຖ່ພຽງຜູ້ດຽວ, ເຖິງແມ່ນເຂົາຈະບອກວ່າ ພວກເຂົາເປັນຂອງພຣະອົງກໍຕາມ. ການກະທຳດັ່ງກ່າວ ເປັນການຖືວ່າ ພຣະເຢຊູບໍ່ເປັນພຣະຜູ້ຊ່ວຍ ທີ່ສົມບູນ ຫຼືພວກເຂົາທີ່ຮັບເອົາພຣະອົງເປັນພຣະຜູ້ຊ່ວຍໃຫ້ລອດໂດຍຄວາມເຊື່ອນີ້ ຈະຕ້ອງປະຕິບັດຕາມທຸກສິ່ງທີ່ຄວນທຳ ໃນພຣະອົງເພື່ອຄວາມລອດພົ້ນຂອງເຂົາເອງ.

## ວັນແຫ່ງພຣະເຈົ້າ ມື້ທີ 12

*ຖາມ:* 31. ເປັນຫຍັງພຣະອົງຈຶ່ງຖືກເອີ້ນຊື່ວ່າ "ພຣະຄຣິສ" ຜູ້ຊຶ່ງມາຈາກພຣະເຈົ້າ ? 4.031

*ຕອບ:* ເພາະວ່າ ພຣະອົງຊົງຖືກສະຖາປະນາແລ້ວ ໂດຍພຣະເຈົ້າພຣະບິດາ ແລະຊົງຖືກເຈີມດ້ວຍພຣະວິນຍານບໍຣິສຸດ ໃຫ້ມາເປັນຜູ້ພະຍາກອນ ແລະເປັນອາຈານຂອງພວກເຮົາ. ເປັນຜູ້ເປີດເຜີຍຄວາມລັບແຫ່ງຈຸດປະສົງ ແລະແຜນການ ຂອງພຣະເຈົ້າ ໃນການໄຖ່ພວກເຮົາ; ພຣະອົງຊົງມາເປັນສາມາຈານຜູ້ຍິ່ງໃຫຍ່ຂອງເຮົາ, ໄຖ່ພວກເຮົາດ້ວຍການຖວາຍ ພຣະອົງເອງ, ຂໍຄວາມກະຣຸນາຈາກພຣະບິດາແທນເຮົາ,ແລະມາເປັນພຣະຣາຊາ ອັນຕລອດໄປເປັນນິດຂອງເຮົາ; ປົກຄອງພວກເຮົາດ້ວຍພຣະທັມ ແລະພຣະວິນຍານຂອງພຣະອົງ, ແລະປົກປ້ອງຄຸ້ມຄອງ ແລະຮັກສາພວກເຮົາໄວ້ໃຫ້ຢູ່ໃນ ການຊົງໄຖ່ຊຶ່ງພຣະອົງໄດ້ຊົງເອົາຊັຍຊະນະເພື່ອເຮົານັ້ນ.

ຖາມ: 32. ເປັນຫຍັງ ທ່ານຈຶ່ງຖືກເອີ້ນວ່າ ຄຣິສຕຽນ ? 4.032

ຕອບ: ທັ້ງນີ້ ເພາະ ໂດຍຜ່ານຄວາມເຊື່ອ ຂ້າພະເຈົ້າໄດ້ມີສ່ວນຮ່ວມໃນພຣະຄຣິສ ແລະ ໃນການຊົງເຈີມຂອງພຣະອົງ, ຊຶ່ງຂ້າ ພະເຈົ້າຍອມຮັບໃນນາມຊື່ຂອງພຣະອົງ, ຍອມມອບຊີວິດ ໃຫ້ເປັນຂອງຖວາຍທີ່ມີຊີວິດແກ່ພຣະອົງ ດ້ວຍຄວາມກະຕັນຍູ ຮູ້ຄຸນພຣະອົງ, ແລະຕໍ່ສູ້ກັບອໍານາດບາບ ແລະຜີມານ ດ້ວຍອິສະຣະພາບ ແລະດ້ວຍສະຕິຮູ້ສຶກຊອບທີ່ ໃນຕລອດຊີວິດນີ້ ແລະຈາກນັ້ນ ກໍຈະໄດ້ຮ່ວມປົກຄອງສິ່ງສ້າງມາຮ່ວມກັບພຣະອົງ.

## ວັນແຫ່ງພຣະເຈົ້າ ມື້ທີ 13

ຖາມ: 33. ເປັນຫຍັງພຣະອົງຈຶ່ງຖືກເອີ້ນວ່າ ພຣະຣາຊບຸດອົງດຽວຂອງພຣະບິດາ, ໃນເວລາທີ່ພວກເຮົາເອງກໍເປັນລູກຂອງພຣະເຈົ້າເຊັ່ນກັນ ? 4.033

ຕອບ: ເພາະວ່າ ພຣະຄຣິສເທົ່ານັ້ນ ທີ່ເປັນພຣະບຸດອົງນິຣັນດອນຂອງພຣະເຈົ້າ, ຊຶ່ງໂດຍພຣະຄຸນນັ້ນ ພວກເຮົາຈຶ່ງຖືກເອີ້ນງວ່າ ເປັນລູກຂອງພຣະເຈົ້າ.

ຖາມ: 34. ເປັນຫຍັງ ທ່ານຈຶ່ງເອີ້ນພຣະອົງວ່າ ເປັນພຣະເຈົ້າ ? 4.034

ຕອບ: ເພາະພຣະອົງຊົງໄຖ່ພວກເຮົາດ້ວຍພຣະກາຍ ແລະພຣະໂລຫິດຂອງພຣະອົງ ບໍ່ແມ່ນດ້ວຍເງິນຄໍາ. ພຣະອົງຊົງໄຖ່ເຮົາ ທັ້ງກາຍແລະຈິດວິນຍານໃຫ້ອອກຈາກຄວາມຜິດບາບ ແລະຈາກການຄອບຄອງຂອງຜີມານທຸກຢ່າງ ແລ້ວໄດ້ຮັບເອົາເຮົາເປັນ ຂອງພຣະອົງພຽງຜູ້ດຽວ.

## ວັນແຫ່ງພຣະເຈົ້າ ມື້ທີ 14

ຖາມ: 35. ເປັນຫຍັງ ຄໍາໝາຍທີ່ວ່າ "ຊົງປະຕິສົນທິເປັນມະນຸດໂດຍທາງພຣະວິນຍານບໍຣິສຸດ ຊົງປະສູດຈາກນາງ ມາຣີອາ ຍິງພົມມະຈາຣີ" ? 4.035

ຕອບ: ພຣະບຸດອົງນິຣັນຂອງພຣະເຈົ້າ, ຜູ້ຊຶ່ງເປັນຄວາມຈິງ ແລະເປັນພຣະເຈົ້າ, ໄດ້ຍອມເອົາຕົວເອງມາເກີດເປັນມະນຸດ ເໝືອນຢ່າງພວກເຮົາດ້ວຍເລືອດເນື້ອ ຈາກມາຣີອາ ຍິງພົມມະຈາຣີ ໂດຍການຊົງນໍາຂອງພຣະວິນຍານບໍຣິສຸດ, ເພື່ອພຣະອົງຈະໄດ້ ເປັນເຊື້ອສາຍຂອງກະສັດ ດາວິດຢ່າງສົມບູນ. ພຣະອົງຊົງທໍາທຸກຢ່າງເໝືອນຄົນທົ່ວໄປ ຍົກເວັ້ນການບາບ.

ຖາມ: 36. ທ່ານໄດ້ຮັບຫຍັງແດ່ ຈາກການລົງມາໂດຍພຣະວິນຍານ ແລະການກໍາເນີດຂອງພຣະຄຣິສ ? 4.036

ຕອບ: ພຣະອົງຊົງເປັນຜູ້ໄກ່ເກັ່ຍຂອງພວກເຮົາ ຊຶ່ງໃນທາງແຫ່ງພຣະເຈົ້າ, ພຣະອົງຊົງປົກບັງ ດ້ວຍພຣະອົງເອງ ຊົງເຮັດໃຫ້ຂ້າພະເຈົ້າ ເປັນຄົນບໍຣິສຸດ ແລະປາສຈາກບາບ ໃນສາຍພຣະເນດພຣະເຈົ້າ.

## ວັນແຫ່ງພຣະເຈົ້າ ມື້ທີ 15

ຖາມ: 37. ທ່ານເຂົ້າໃຈແນວໃດ ຕໍ່ຄໍາສັບທີ່ວ່າ "ຖືກທໍຣະມານ" 4.037

*ຕອບ:* ໃນຊີວິດຂອງພຣະອົງໃນໂລກມະນຸດ, ໂດຍສະເພາະໃນບັ້ນທ້າຍແຫ່ງຊີວິດຂອງພຣະອົງ, ພຣະອົງໄດ້ຊົງໃຊ້ ຮ່າງກາຍ ແລະຈິດວິນຍານຂອງພຣະອົງ ເພື່ອຮອງຮັບເອົາຄວາມໂກດຮ້າຍຂອງພຣະເຈົ້າຕໍ່ຄວາມຜິດບາບ ຂອງມະນຸດທັງມວນ, ຊຶ່ງໂດຍການທໍຣະມານຂອງພຣະອົງນີ້ ເພື່ອຊ່ວຍໄຖ່ໃຫ້ເຮົາພົ້ນຈາກການທຳຮາຍ ຂອງພຣະເຈົ້າ ທັ້ງທາງດ້ານຮ່າງກາຍ ແລະຈິດວິນຍານ ພຣະອົງຊົງໃຫ້ພຣະອົງເອງເປັນເຄື່ອງຖວາຍບູຊາອັນ ນຶ່ງອັນດຽວ ເພື່ອໃຫ້ເຮົາໄດ້ຮັບພຣະຄຸນ, ຄວາມຊອບທັມ, ແລະຊີວິດອັນຕລອດໄປເປັນນິດຈາກພຣະເຈົ້າ.

*ຖາມ:* 38. ເປັນຫຍັງພຣະອົງຈຶ່ງຖືກທໍຣະມານ "ດ້ອຍປີລາດ" ຜູ້ປົກຄອງ? 4.038
*ຕອບ:* ເພື່ອວ່າພຣະອົງຜູ້ຊົງບໍ່ມີຄວາມຜິດ ຈະໄດ້ຖືກພິພາກສາຈາກມະນຸດ ແລະເພື່ອໃຫ້ເຮົາຜ່ານພົ້ນຈາກການ ພິພາກສາອັນ ຮ້າຍແຮງຂອງພຣະເຈົ້າ ທີ່ຈະຕົກໃສ່ພວກເຮົາ.

*ຖາມ:* 39. ມີຫຍັງທີ່ລື່ນກັນ ຣະຫວ່າງ ການຊົງຖືກຄຶງໄວ້ທີ່ໄມ້ກາງແຂນ ແລະການຕາຍແບບອື່ນໆ? 4.039
*ຕອບ:* ແນ່ນອນ. ຍ້ອນແບບນີ້ ຂ້າພະເຈົ້າຈຶ່ງມີຄວາມໝັ້ນໃຈວ່າ ພຣະອົງໄດ້ຊົງຮັບເອົາການສາບແຊ່ງທີ່ຂ້າພະເຈົ້າ ສົມຄວນ ໄດ້ຮັບນັ້ນແທນຂ້າພະເຈົ້າ, ຍ້ອນການຕາຍທີ່ໄມ້ກາງແຂນນັ້ນ ໄດ້ຖືກສາບແຊ່ງຈາກພຣະເຈົ້າ.

## ວັນແຫ່ງພຣະເຈົ້າ ນີ້ທີ 16

*ຖາມ:* 40. ເປັນຫຍັງ ພຣະຄຣິສຈຶ່ງຕ້ອງຖືກທໍຣະມານ "ເຖິງຕາຍ"? 4.040
*ຕອບ:* ເພາະຄວາມຊອບທັມ ແລະຄວາມຈິງຂອງພຣະເຈົ້າ ບໍ່ມີສິ່ງໃດຈະມາແກ້ໄຂຄວາມຜິດບາບຂອງເຮົາໄດ້ ນອກຈາກການ ວາຍພຣະຊົນຂອງພຣະບຸດຂອງພຣະເຈົ້າເທົ່ານັ້ນ.

*ຖາມ:* 41. ເປັນຫຍັງພຣະອົງຈຶ່ງຕ້ອງ "ຖືກຝັງ" 4.041
*ຕອບ:* ເພື່ອຢັ້ງຢືນວ່າ ພຣະອົງຊົນວາຍພຣະຊົນແທ້.

*ຖາມ:* 42. ຖ້າພຣະຄຣິສຕາຍເພື່ອເຮົາ ເປັນຫຍັງເຮົາຈຶ່ງຕ້ອງຕາຍເໝືອນກັນ? 4.042
*ຕອບ:* ການຕາຍຂອງພວກເຮົາ ບໍ່ແມ່ນການແກ້ໄຂຄວາມຜິດບາບຂອງເຮົາໄດ້ ແຕ່ເປັນການຕາຍເພາະບາບ ແລະເຂົ້າສູ່ຊີວິດ ອັນຕລອດໄປເປັນນິດ.

*ຖາມ:* 43. ມີຜົນປະໂຫຍດຫຍັງອີກແດ່ ທີ່ເຮົາໄດ້ຮັບຈາກການຖວາຍ ແລະການວາຍພຣະຊົນຂອງ 4.043
ພຣະຄຣິສທີ່ໄມ້ກາງແຂນ?
*ຕອບ:* ດ້ວຍອຳນາດຂອງພຣະອົງ ເຮັດໃຫ້ພວກເຮົາກໍໄດ້ຖືກຕອກຕຶງໄວ້ທີ່ໄມ້ກາງແຂນ, ໄດ້ຕາຍ, ໄດ້ຖືກຝັງດ້ວຍ ກັນກັບພຣະອົງ ດັ່ງນັ້ນ ຄວາມຮູ້ສຶກຊົ່ວຮ້າຍທີ່ປົກຮ່າງກາຍທີ່ຕ້ອງຕາຍຂອງເຮົາ ຈະບໍ່ມີອຳນາດປົກຄອງເຮົາ ອີກຕໍ່ໄປ, ແຕ່ພວກເຮົາ ພວກເຮົາຈະໄດ້ຖວາຍຕົວຂອງເຮົາໃຫ້ກັບພຣະອົງ ເພື່ອເປັນການຂອບພຣະຄຸນ ພຣະອົງ.

*ຖາມ:* 44. ເປັນຫຍັງຈຶ່ງມີຄຳເວົ້າຕໍ່ໄປວ່າ "ພຣະອົງຊົງລົງໄປຍັງແດນມໍຣະນາ"? 4.044

*ຕອບ:* ເພື່ອການພິພາກສາໂລກຄັ້ງສຸດທ້າຍນັ້ນ ຂ້າພະເຈົ້າຈະໝັ້ນໃຈໄດ້ວ່າ ພຣະຄຣິສຜູ້ຊົງເປັນພຣະເຈົ້າຂອງຂ້າພະເຈົ້າ ໄດ້ໄຖ່ຂ້າພະເຈົ້າອອກຈາກຄວາມໂສກເສົ້າໃນແດນມໍຣະນາ ແລະການທໍຣະມານຢ່າງໂຫດຮ້າຍ, ຄວາມເຈັບປວດ, ແລະຄວາມຢ້ານກົວ ຊຶ່ງພຣະອົງໄດ້ຊົງທໍຣະມານ ໃນດ້ານຈິດວິນຍານຂອງພຣະອົງທີ່ໄມ້ກາງແຂນ ແລະກ່ອນນັ້ນອີກ.

## ວັນແຫ່ງພຣະເຈົ້າ ນີ້ທີ 17

*ຖາມ:* 45. ເຮົາໄດ້ພົນປະໂຫຍດຫຍັງແດ່ ຈາກການ "ຄືນພຣະຊົນ" ຂອງພຣະຄຣິສ? 4.045

*ຕອບ:* ອັນທຳອິດທີ່ໄດ້ກໍຄື ພຣະອົງຊົງຊະນະຄວາມຕາຍຊຶ່ງພຣະອົງຊົງໃຫ້ພວກເຮົາມີສ່ວນດ້ວຍໃນຄວາມຊອບທັມ ທີ່ພຣະອົງຊົງຮັກສາໄວ້ໃຫ້ເຮົາໃນການຕາຍນັ້ນ. ອັນທີສອງຄື ພວກເຮົາເຊັ່ນດຽວກັນ ໄດ້ຄືນມາໂດຍຣິດອຳນາດຂອງພຣະອົງ ໃຫ້ມີຊີວິດໃໝ່. ອັນທີສາມຄື ການຄືນພຣະຊົນຂອງພຣະຄຣິສ ໄດ້ປະທານເປັນພຣະພອນແກ່ເຮົາໃຫ້ເປັນຄືນມາອີກ.

## ວັນແຫ່ງພຣະເຈົ້າ ນີ້ທີ 18

*ຖາມ:* 46. ທ່ານເຂົ້າໃຈແນວໃດໃນຄຳທີ່ວ່າ "ພຣະອົງຊົງສະເດັດສູ່ສວັນ". 4.046

*ຕອບ:* ພຣະຄຣິສໄດ້ຊົງຖືກຮັບຂຶ້ນໄປຈາກໂລກມະນຸດສູ່ສວັນ ຕໍ່ໜ້າຕໍ່ຕາເຫຼົ່າອັຄສາວົກຂອງພຣະອົງ ແລະຈະຢູ່ທີ່ນັ້ນໃນນາມ ຂອງພວກເຮົາ ຈົນກວ່າພຣະອົງຈະສະເດັດກັບມາອີກເພື່ອພິພາກສາ ທັງຄົນເປັນແລະຄົນຕາຍ.

*ຖາມ:* 47. ຖ້າດັ່ງນັ້ນ ພຣະຄຣິສຈະບໍ່ຢູ່ກັບພວກເຮົາຈົນເຖິງຍຸກສຸດທ້າຍຂອງໂລກເໝືອນທີ່ໄດ້ສັນຍາກັບພວກເຮົານັ້ນບໍ? 4.047

*ຕອບ:* ພຣະຄຣິສ ຊົງເປັນມະນຸດໂດຍແທ້ ແລະກໍເປັນພຣະເຈົ້າໂດຍແທ້ເຊັ່ນກັນ. ໃນຖານະເປັນມະນຸດພຣະອົງຈຶ່ງບໍ່ສາມາດ ຢູ່ໃນໂລກນີ້ອີກ, ແຕ່ຄວາມເປັນພຣະເຈົ້າ, ຄວາມຍິ່ງໃຫຍ່, ພຣະຄຸນ, ແລະພຣະວິນຍານ ບໍ່ເຄີຍໜີຈາກເຮົາເລີຍ.

*ຖາມ:* 48. ຖ້າດັ່ງນັ້ນ ບໍ່ແມ່ນທຳມະຊາດສອງຢ່າງທີ່ຢູ່ໃນພຣະຄຣິສແຍກອອກຈາກກັນບໍ, ຖ້າຄວາມເປັນມະນຸດຢູ່ໃສ ຄວາມເປັນພຣະເຈົ້າກໍບໍ່ຢູ່ທີ່ນັ້ນ? 4.048

*ຕອບ:* ບໍ່ແມ່ນຢ່າງນັ້ນດອກ, ຍ້ອນຄວາມເປັນພຣະເຈົ້າທີ່ເຮົາບໍ່ສາມາດເຂົ້າໃຈ ແລະສາມາດປາກົດຢູ່ທຸກທີ່ທຸກບ່ອນໄດ້, ຊຶ່ງຈະຕ້ອງເປັນໄປຕາມທີ່ວ່າ ຄວາມເປັນພຣະເຈົ້ານັ້ນ ຢູ່ເໜືອຂອບເຂດຂອງມະນຸດທີ່ຊົງຢູ່ນຳນັ້ນ, ແລະກໍບໍ່ໄດ້ຢູ່ໃນຄວາມເປັນ ມະນຸດນັ້ນເຊັ່ນກັນ ແລະຍັງມີສ່ວນຮ່ວມຢູ່ໃນກາຍອັນດຽວກັນນັ້ນ.

*ຖາມ:* 49. ພົນປະໂຫຍດຢ່າງໃດ ທີ່ເຮົາໄດ້ຈາກການຂຶ້ນສູ່ສວັນຂອງພຣະຄຣິສ? 4.049

ຕອບ: ນຶ່ງຄື ພຣະອົງຊົງເປັນທະນາຍຄວາມໃຫ້ເຮົາຕໍ່ໜ້າພຣະບິດາຂອງພຣະອົງໃນສວັນ. ສອງຄື ພວກເຮົາມີເນື້ອກາຍ ໃນສວັນ ດັ່ງທີ່ພຣະອົງຊົງໃຫ້ຄຳໝັ້ນສັນຍາໃນຖານະເປັນສີສະນັ້ນວ່າ ພຣະອົງຈະຊົງມາຮັບເອົາເຮົາ ໄປຢູ່ກັບພຣະອົງ. ສາມຄື ພຣະອົງຊົງສົ່ງພຣະວິນຍານຂອງພຣະອົງເພື່ອປະທານຣິດອຳນາດທີ່ພວກເຮົາຊອກສແວງຫາ ຊຶ່ງຢູ່ທາງເທິງນັ້ນ ພຣະຄຣິສໄດ້ຊົງ ຢູ່ກ້ຳຂວາພຣະຫັດຂອງພຣະເຈົ້າ ແລະບໍ່ໄດ້ຊົງຢູ່ໃນໂລກນີ້ອີກ.

## ວັນແຫ່ງພຣະເຈົ້າ ນີ້ທີ 19

ຖາມ: 50. ເປັນຫຍັງຈຶ່ງມີຄຳຕື່ມອີກວ່າ "ຊົງປະທັບຢູ່ກ້ຳຂວາພຣະຫັດຂອງພຣະເຈົ້າ" 4.050

ຕອບ: ເພາະພຣະຄຣິສຊົງຂຶ້ນສູ່ສວັນ ເພື່ອພຣະອົງຈະຊົງໄດ້ຮັບກຽດຕິຍົດໃນທີ່ນັ້ນ ໃນຖານະເປັນສີສະຂອງຄຣິສຕະຈັກ ຊຶ່ງເປັນບ່ອນທີ່ພຣະບິດາຊົງປົກຄອງສິ່ງທັງຫຼາຍ.

ຖາມ: 51. ພົນປະໂຫຍດຫຍັງທີ່ເຮົາໄດ້ຈາກກຽດຕິຍົດຂອງພຣະຄຣິສນີ້, ຫົວຂອງເຮົານັ້ນບໍ? 4.051

ຕອບ: ອັນທຳອິດທີ່ໄດ້ກໍຄື ໂດຍຜ່ານພຣະວິນຍານບໍຣິສຸດຂອງພຣະອົງ ພຣະອົງໄດ້ຊົງຖອກເທຂອງປະທານທີ່ມາແຕ່ສວັນ ໃຫ້ກັບພວກເຮົາທີ່ເປັນສະມາຊິກ. ອັນທີ່ສອງຄື ໂດຍຣິດອຳນາດຂອງພຣະອົງ ພຣະອົງຊົງປົກປ້ອງ ແລະສະໜັບສະໜູນ ພວກເຮົາຕໍ່ສູ້ກັບສັດຕຣູຂອງເຮົາ.

ຖາມ: 52. ຄວາມເລົ້າໂລມແນວໃດທີ່ພຣະຄຣິສຈະໃຫ້ທ່ານ ໃນເວລາກັບມາ "ພິພາກສາທັງຄົນເປັນແລະຄົນຕາຍ" ນັ້ນ? 4.052

ຕອບ: ໃນຕໍ່ໜ້າ ທຸກຄວາມເຈັບປວດ ແລະການຈ່ອງລ້າງຈ່ອງຜານທີ່ມີນັ້ນ ຂ້າພະເຈົ້າ ຈະເງີຍຫົວຂຶ້ນໄດ້ ພຣະຜູ້ພິພາກສາ ຈາກສວັນ ຜູ້ຊົງຍອມຖວາຍຕົນເອງຮັບການພິພາກສາຈາກພຣະເຈົ້າແທນຂ້າພະເຈົ້າ ແລະຍົກເລີກການສາບແຊ່ງຕ່າງໆ ອອກຈາກຂ້າພະເຈົ້າແລ້ວນັ້ນ, ພຣະອົງຈະທຳລາຍສັດຕຣູທັງຫຼາຍຂອງພຣະອົງ ແລະຂອງຂ້າພະເຈົ້າ ໃນຕົກໃນຄວາມຈິບຫາຍອັນຕລອດໄປເປັນນິດ, ພຣະອົງຈະຊົງຮັບເອົາຂ້າພະເຈົ້າ ພ້ອມກັບບັນດາພວກທີ່ພຣະອົງຊົງເລືອກ ໄປສູ່ຄວາມມ່ວນຊື່ນ ແຫ່ງສວັນ ແລະສະງ່າຣາສີກັບພຣະອົງ.

# ພຣະວິນຍານບໍຣິສຸດ

## ວັນແຫ່ງພຣະເຈົ້າ ນີ້ທີ 20

ຖາມ: 53. ທ່ານມີຄວາມເຊື່ອແນວໃດ ກ່ຽວກັບ "ພຣະວິນຍານບໍຣິສຸດ" 4.053

ຕອບ: ອັນທຳອິດຄື, ພຣະອົງຊົງເປັນພຣະເຈົ້າອົງຖາວອນເໝືອນກັນກັບພຣະບິດາແບະພຣະບຸດ. ອັນທີສອງຄື, ໂດຍຄວາມເຊື່ອທີ່ແທ້ຈິງຂອງຂ້າພະເຈົ້າ, ພຣະວິນຍານຂອງພຣະເຈົ້າໄດ້ຊົງສະຖິດຢູ່ນຳຂ້າພະເຈົ້າເໝືອນກັນ, ພຣະອົງຊົງນຳ ຂ້າພະເຈົ້າໃຫ້ມີສ່ວນກັບພຣະຄຣິສ, ແລະມີສ່ວນໃນພົນປະໂຫຍດທັງໝົດຂອງພຣະອົງ, ພຣະອົງຊົງເລົ້າໂລມຂ້າພະເຈົ້າ ແລະຢູ່ກັບຂ້າພະເຈົ້າຕລອດໄປເປັນນິດ.

## ວັນແຫ່ງພຣະເຈົ້າ ນີ້ທີ 21

*ຖາມ:* 54. ທ່ານເຊື່ອແນວໃດ ກ່ຽວກັບ "ຄຣິສຕະຈັກສາກົນ" 4.054

*ຕອບ:* ຂ້າພະເຈົ້າເຊື່ອວ່າ, ແຕ່ຕົ້ນເດີມ ຈົນເຖິງວັນສຸດທ້າຍຂອງໂລກ, ແລະ ໃນທັງໝົດມະນຸດຊາດ, ພຣະບຸດຂອງພຣະເຈົ້າ ໂດຍທາງພຣະວິນຍານ ແລະພຣະທັມຂອງພຣະອົງຈະຕ້ອງຖືກປະກາດຂະຫຍາຍອອກໄປ, ຖືກປົກປັກຮັກສາໄວ້ສໍາລັບພຣະອົງ, ໃນການເປັນອັນນຶ່ງອັນດຽວກັນໃນຄວາມເຊື່ອ, ຄຣິສຕະຈັກກໍຈະມີຊີວິດອັນຕລອດໄປເປັນນິດ. ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າ ເຊື່ອວ່າ ຂ້າພະເຈົ້າຈະສືບຕໍ່ເປັນສະມາຊິກທີ່ມີຊີວິດຢູ່ຕລອດໄປເປັນນິດ.

*ຖາມ:* 55. ທ່ານເຂົ້າໃຈແນວໃດ ກ່ຽວກັບ "ຄວາມສາມັກຄີທັມຣະຫວ່າງໄພ່ພົນທັງປວງຂອງພຣະເຈົ້າ" 4.055

*ຕອບ:* ນຶ່ງຄື, ພວກທີ່ເຊື່ອທຸກຄົນ ເປັນປາກກະບອກສຽງຂອງພຣະຄຣິສ, ແລະທຸກຊັພສິນບັດ ແລະຂອງປະທານຈະຕ້ອງບາງມີການແບ່ງປັນຢູ່ໃນກຸ່ມມະນັສການກຸ່ມນຶ່ງ. ສອງຄື, ແຕ່ລະຄົນຕ້ອງຮັບຮູ້ວ່າ ຕົວເອງມີໜ້າທີ່ຮັບຜິດຊອບ ໃນການໃຊ້ຂອງປະທານນັ້ນຢ່າງອິສະຣະ ແລະດ້ວຍຄວາມມ່ວນຊື່ນ ແລະເພື່ອພົນປະໂຫຍດຂອງສະມາຊິກຄົນອື່ນໆດ້ວຍ.

*ຖາມ:* 56. ທ່ານເຊື່ອແນວໃດກ່ຽວກັບ "ການພຣະຣາຊທານອະພັຍໂທດບາບ" ? 4.056

*ຕອບ:* ວຽກງານການເຮັດໃຫ້ມີການຄືນດີກັນຂອງພຣະຄຣິສ, ພຣະເຈົ້າຈະບໍ່ຈົດຈໍາເອົາຄວາມຜິດບາບ ຂອງຂ້າພະເຈົ້າ ຊຶ່ງຂ້າພະເຈົ້າໄດ້ຕໍ່ສູ້ມາຕລອດຊີວິດນີ້, ແຕ່ພຣະອົງ ດ້ວຍພຣະຄຸນຂອງພຣະອົງ ພຣະອົງໄດ້ຊົງໃຫ້ຄວາມຊອບທັມແຫ່ງ ພຣະຄຣິສຕໍ່ຂ້າພະເຈົ້າ ຊຶ່ງຂ້າພະເຈົ້າຈະບໍ່ໄດ້ເຂົ້າໃນການຖືກທໍາລາຍອີກເລີຍ.

## ວັນແຫ່ງພຣະເຈົ້າ ນີ້ທີ 22

*ຖາມ:* 57. ຄວາມເລົ້າໂລມແນວໃດທີ່ "ການເປັນຄືນມາທາງດ້ານຮ່າງກາຍ" ຈະໃຫ້ທ່ານ? 4.057

*ຕອບ:* ຫຼັງຈາກຊີວິດນີ້ແລ້ວ, ຈິດວິນຍານຂອງຂ້າພະເຈົ້າຈະໄດ້ຖືກນໍາໄປຢູ່ກັບພຣະຄຣິສຊຶ່ງເປັນສີສະ, ຊຶ່ງໃນດ້ານເນື້ອກາຍນີ້, ຫຼັງຈາກຖືກຟື້ນຂຶ້ນມາດ້ວຍກັນກັບພຣະຄຣິສແລ້ວ ກໍຈະເຂົ້າຮ່ວມກັບຈິດວິນຍານຂອງຂ້າພະເຈົ້າ, ແລະຈະຖືກ ເລົ້າໂລມດ້ວຍພຣະສະງ່າຣາສີຂອງພຣະຄຣິສ.

*ຖາມ:* 58. ຄວາມເລົ້າໂລມແນວໃດ ໃນຂໍ້ທີ່ວ່າ "ຊີວິດອັນຕລອດໄປເປັນນິດ" ໃຫ້ທ່ານ? 4.058

*ຕອບ:* ໃນເວລາທີ່ຂ້າພະເຈົ້າໄດ້ຮູ້ສຶກວ່າ ຫົວໃຈຂອງຕົນກໍາລັງມີຄວາມສຸກແບບຕລອດໄປເປັນນິດແລ້ວ, ຂ້າພະເຈົ້າຈະຕ້ອງ ມີສືບຕໍ່ອີກໃນຊີວິດໜ້າ, ຈະໄດ້ຮັບພຣະພອນ, ຊຶ່ງບໍ່ມີຕາໃດຈະເຫັນໄດ້ ແລະບໍ່ມີຫູໃດຈະສາມາດຍິນໄດ້ ຫຼືແມ້ນແຕ່ຫົວໃຈຂອງ ມະນຸດກໍຍັງບໍ່ສາມາດຮັບຮູ້ໄດ້, ດັ່ງນັ້ນ ຂໍສັຣເສີນພຣະເຈົ້າຕລອດໄປເປັນນິດ.

## ວັນແຫ່ງພຣະເຈົ້າ ນີ້ທີ 2

*ຖາມ:* 59. ແຕ່ວ່າ ແມ່ນຫຍັງທີ່ຊ່ອຍທ່ານໃຫ້ມີຄວາມເຊື່ອໃນສິ່ງທັງໝົດນີ້? 4.059

*ຕອບ:* ຂ້າພະເຈົ້າໄດ້ກາຍເປັນຄົນຊອບທັມໃນພຣະຄຣິສຢູ່ຕໍ່ພຣະພັກພຣະເຈົ້າ, ແລະມີສ່ວນໃນຊີວິດອັນຕລອດໄປເປັນນິດ.

*ຖາມ:* 60. ທ່ານເປັນຄົນຊອບທັມໃນຕໍ່ໜ້າພຣະເຈົ້າໄດ້ແບບໃດ? 4.060

*ຕອບ:* ຍ້ອນຄວາມເຊື່ອອັນແທ້ຈິງໃນພຣະເຢຊູຄຣິສເທົ່ານັ້ນ. ຄວາມຈິງ ໃນໄຕ້ຈິດສຳນຶກຂອງຂ້າພະເຈົ້າ ຂ້າພະເຈົ້າຮູ້ວ່າ ໄດ້ທຳຄວາມຜິດບາບຕໍ່ສູ້ກັບຂໍບັນຍັດທັງໝົດຂອງພຣະເຈົ້າ ແລະບໍ່ສາມາດຮັກສາໄດ້ຈັກຂໍ້ເລີຍ, ແລະຂ້າພະເຈົ້າຍັງມີໃຈເອນ ອຽງໄປຫາຄວາມຜິດບາບຢູ່¨ ແຕ່ໂດຍຂ້າພະເຈົ້າບໍ່ຕ້ອງທຳດີຫຍັງໝົດ, ພຣະຄຸນຂອງພຣະເຈົ້າໄດ້ຊ່ວຍຊ່ອຍເຫຼືອຂ້າພະເຈົ້າ ໃຫ້ຢູ່ໃນຄວາມຊອບທັມ ແລະຄວາມບໍຣິສຸດແຫ່ງພຣະຄຣິສ ເໝືອນກັບຂ້າພະເຈົ້າບໍ່ໄດ້ທຳຄວາມຜິດບາບເລີຍ, ທຸກສິ່ງນີ້ ຂ້າພະເຈົ້າຈະຮັບໄດ້ໃນເມື່ອມີຄວາມເຊື່ອແລະຟັງຄວາມພຣະອົງ ຍອມຮັບເອົາພຣະອົງດ້ວຍຄວາມເຊື່ອແລະໄວ້ວາງໃຈທີ່ອອກຈາກຫົວໃຈອັນແທ້ຈິງຂອງຂ້າພະເຈົ້າ.

*ຖາມ:* 61. ເປັນຫຍັງທ່ານຈຶ່ງເວົ້າວ່າ ທ່ານເປັນຄົນຊອບທັມໂດຍທາງຄວາມເຊື່ອເທົ່ານັ້ນ? 4.061

*ຕອບ:* ເພາະວ່າ ບໍ່ແມ່ນຍ້ອນຂ້າພະເຈົ້າເຮັດໃຫ້ພຣະເຈົ້າພໍໃຈຍ້ອນຄຸນຄ່າແຫ່ງຄວາມເຊື່ອນັ້ນດອກ ແຕ່ຍ້ອນຄວາມພໍໃຈ, ຄວາມຊອບທັມ, ແລະຄວາມບໍຣິສຸດຂອງພຣະຄຣິສເທົ່ານັ້ນ ທີ່ກາຍຄວາມຊອບທັມຂອງຂ້າພະເຈົ້າຕໍ່ໜ້າພຣະເຈົ້າ, ແລະຍ້ອນວ່າ ຂ້າພະເຈົ້າສາມາດຍອມຮັບເອົາສິ່ງນັ້ນ ແລະເຮັດໃຫ້ສິ່ງດັ່ງກ່າວກາຍເປັນຂອງຂ້າພະເຈົ້າເອງ ໂດຍທີ່ບໍ່ບໍ່ທາງອື່ນອີກ ນອກຈາກ ທາງຄວາມເຊື່ອພຽງຢ່າງດຽວ.

## ວັນແຫ່ງພຣະເຈົ້າ ນີ້ທີ 24

*ຖາມ:* 62. ແຕ່ເປັນຫຍັງ ການທຳດີຂອງເຮົາຈຶ່ງບໍ່ເຮັດໃຫ້ເຮົາຊອບທັມຕໍ່ໜ້າພຣະເຈົ້າ 4.062
ຫຼືຢ່າງນ້ອຍກໍມີສ່ວນໃນຄວາມຊອບທັມນັ້ນ ?

*ຕອບ:* ເພາະຄວາມຊອບທັມທີ່ຂ້າພະເຈົ້າສາມາດຢືນຢູ່ຕໍ່ໜ້າພຣະພັກພຣະເຈົ້າໄດ້ນັ້ນ ຕ້ອງເປັນແບບຄົບຖ້ວນແລະຖືກຕ້ອງ ກັບກົດພຣະບັນຍັດແຫ່ງພຣະເຈົ້າ. ແຕ່ການທຳດີຂອງເຮົາໃນໂລກນີ້ ລ້ວນເປັນສິ່ງບໍ່ດີຄົບຖ້ວນ ແລະເຕັມໄປດ້ວຍບາບ.

*ຖາມ:* 63. ເປັນຫຍັງການທຳດີຂອງເຮົາຈຶ່ງບໍ່ໄດ້ບຸນຫຍັງໝົດ, ເຖິງແມ່ນວ່າ ພຣະເຈົ້າມີໂຄງການຈະ 4.063
ອວຍພອນການທຳສິ່ງນີ້ໃນຊາດນີ້ ແລະຊາໜ້າເຊັ່ນດຽວກັນກໍຕາມ?

*ຕອບ:* ພຣະພອນນີ້ບໍ່ແມ່ນໃຫ້ທ່ານຍຊ້ອນເຮັດດີ ແຕ່ຍ້ອນພຣະຄຸນຂອງພຣະເຈົ້າ.

*ຖາມ:* 64. ແຕ່ການສອນແບບນີ້ ຈະບໍ່ເຮັດໃຫ້ຄົນເກີດການບໍ່ສົນໃຈ ແລ້ວທຳບາບບໍ? 4.064

ຕອບ: ບໍ່ແມ່ນດອກ. ເພາະມັນເປັນໄປບໍ່ໄດ້ ທີ່ບຸກຄົນໃດທາກຍອມຮັບເອົາພຣະຄຣິສແລ້ວ ຈະບໍ່ໄດ້ເກີດໝາກຜົນໃນພຣະຄຸນນີ້.

## ພິທີສິນລະລຶກ

## ວັນແຫ່ງພຣະເຈົ້າ ນີ້ທີ 25

ຖາມ: 65. ໃນເມື່ອຄວາມເຊື່ອເທົ່ານັ້ນທີ່ທຳໃຫ້ເຮົາມີສ່ວນໃນພຣະຄຣິສ ແລະໄດ້ຮັບຜົນປະໂຫຍດ ຄວາມເຊື່ອແນວນັ້ນມີກົກເຄົ້າມາຈາກໃສ? 4.065

ຕອບ: ພຣະວິນຍານບໍຣິສຸດ ໄດ້ສ້າງສິ່ງນັ້ນພາຍໃນໃຈຂອງເຮົາ ໂດຍການສອນພຣະທັມຄຳພີ, ແລະຢັ້ງຢືນໂດຍການທຳພິທຳສິນລະລຶກ.

ຖາມ: 66. ພິທີສິນນັ້ນແມ່ນຫຍັງ? 4.066

ຕອບ: ມັນເປັນສິ່ງທີ່ເຫັນໄດ້, ເປັນສັນຍາລັກ ແລະຊົງຕີຕາປະທັບຈາກພຣະເຈົ້າ, ຊຶ່ງການທຳພິທີນີ້ ເຮົາຈະໝັ້ນໃຈວ່າພຣະອົງຈະບໍ່ລືມ ຄຳສັນຍາຂອງພຣະອົງທີ່ມີຕໍ່ເຮົາທີ່ບັນທຶກໄວ້ໃນພຣະຄຳພີ, ດ້ວຍນາມຊື່ນັ້ນ ພຣະຄຣິສໄດ້ຊົງອາຍພຣະຊົນແທນເຮົາທັງຫຼາຍ ເພື່ອເຮົາຈະໄດ້ ຖືກອະພັຍໂທດບາບ ແລະມີຊີວິດອັນຕລອດໄປເປັນນິດ.

ຖາມ: 67. ທັງສອງຢ່າງຄື ພຣະທັມ ແລະພິທີສິນ ສ້າງຂຶ້ນມາເພື່ອເປັນສິ່ງນຳພາຄວາມເຊື່ອຂອງເຮົາຕໍ່ພຣະອົງຜູ້ຊົງອາຍພຣະຊົນທີ່ໄມ້ກາງແຂນວ່າເປັນຜູ້ດຽວທີ່ໄຖ່ເຮົາໃຫ້ພົ້ນບໍ? 4.067

ຕອບ: ແນ່ນອນ, ເພາະພຣະວິນຍາບໍຣິສຸດໄດເສອນເຮົາໃນພຣະຄຳພີ ແລະສະແດງອອກໃນພິທີສິນ ເພື່ອສ້າງທາກຖານໃນການຖືກໄຖ່ໃຫ້ພົ້ນຂອງເຮົາ ຊຶ່ງພຣະເຢຊູຄຣິສໄດ້ທີ່ປະທານແກ່ເຮົາທີ່ໄມ້ກາງແຂນນັ້ນ.

ຖາມ: 68. ພຣະຄຣິສໄດ້ຊົງສັ່ງສອນໃຫ້ມີຈັກພິທີສິນ ໃນພຣະຄຳພີໃໝ່? 4.068

ຕອບ: ມີສອງ ຄື ພິທີສິນບັບຕິສມາ ແລະພິທີສິນມະຫາສະໜິດ.

## ພິທີສິນບັບຕິສມາ

## ວັນແຫ່ງພຣະເຈົ້າ ນີ້ທີ 26

ຖາມ: 69. ສິນບັບຕິສມາ ໄດ້ເຕືອນ ແລະໃຫ້ຄວາມໝັ້ນໃຈ ແກ່ທ່ານແນວໃດ ວ່າ ການອາຍພຣະຊົນຂອງພຣະຄຣິສທີ່ໄມ້ກາງແຂນນັ້ນ ແມ່ນເພື່ອທ່ານ ? 4.069

ຕອບ: ພຣະຄຣິສສັ່ງສອນວ່າ ການຊຳຣະລ້າງພາຍນອກດ້ວຍນ້ຳ ໂດຍພຣະສັນຍາຂອງພຣະອົງ ທ່ານໄດ້ໝັ້ນໃຈວ່າທ່ານໄດ້ຖືກຊຳຣະລ້າງດ້ວຍພຣະໂລຫິດ ແລະດ້ວຍພຣະວິນຍານ ແລ້ວ ເພື່ອໃຫ້ຈິດວິນຍານ ແລະຄວາມບາບຂອງທ່ານຖືກລຶບໄປ ເໝືອນດັ່ງທີ່ຂ້າພະເຈົ້າໄດ້ໃຊ້ນ້ຳລ້າງສ່ວຍຄວາມເປື້ອນເປິະ ອອກຈາກຕົນຕົວທາງນອກຂອງຂ້າພະເຈົ້າ.

*ຖາມ:* 70. ການລ້າງດ້ວຍພຣະໂລຫິດ ແລະດ້ວຍພຣະວິນຍານ ມີຄວາມໝາຍແນວນດ? 4.070

*ຕອບ:* ໝາຍຄວາມວ່າ ໄດ້ຖືກລຶບລ້າງຄວາມຜິດບາບຈາກພະເຈົ້າແລ້ວ ໂດຍພຣະຄຸນ, ເພື່ອພຣະໂລຫິດຂອງພຣະຄຣິສ ທີ່ຊົງໄດ້ຫຼັ່ງໄຫຼເພື່ອເຮົາທີໄມ້ກາງເຂນນັ້ນ, ແລະເຊັ່ນດຽວກັບ ເຮົາໄດ້ຖືກສ້າງຂຶ້ນໃໝ່ໂດຍພຣະວິນຍານ ແລະກາຍເປັນໄພ່ພົນ ຂອງພຣະເຈົ້າ ຊຶ່ງພວກເຮົາຈະກາຍເປັນຜູ້ດຳຣົງຊີວິດຫ່າງຈາກການທຳບາບທຸກວັນນັ້ນ.

*ຖາມ:* 71. ບ່ອນໃດ ທີ່ພຣະຄຣິສໄດ້ສັນຍາວ່າ ຫາກເຮົາຮັບບັບຕິສມາດ້ວຍດ້ວຍ ເຮົາກໍຖືກລ້າງດ້ວຍ 4.071
ພຣະໂລຫິດແລະພຣະວິນຍານຂອງພຣະອົງແລ້ວ?

*ຕອບ:* ໃນຫຼັກຄຳສອນຂອງການຮັບສິນບັບຕິສມານັ້ນ ໄດ້ກ່າວດັ່ງນີ້ "ເຫດສັນນັ້ນ ພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສມາ ໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ" "ບຸກຄົນໃດທີ່ເຊື່ອ ແລະຮັບບັບຕິສມາກໍຈະໄດ້ພົ້ນ: ແຕ່ບຸກຄົນໃດທີ່ບໍ່ເຊື່ອ ກໍຈະຖືກລົງໂທດ."
ພຣະສັນຍານີ້ ຍັງໄດ້ຖືກກ່າວຢູ່ໃນພຣະຄຳພີ ກ່ຽວກັບການບັບຕິສມາວ່າ "ນ້ຳແຫ່ງການເກີດໃໝ່" ແລະຊຳຣະລ້າງຄວາມຜິດບາບໃຫ້ໝົດໄປ.

## ວັນແຫ່ງພຣະເຈົ້າ ມື້ທີ 27

*ຖາມ:* 72. ການລ້າງທາງນອກດ້ວຍນ້ຳເທົ່ານັ້ນ ຈະລ້າງຄວາມບາບໄດ້ຫຼື? 4.072

*ຕອບ:* ບໍ່, ມີແຕ່ພຣະໂລຫິດຂອງພຣະເຢຊູຄຣິສ ແລະການລ້າງຊ່ວຍຈາກພຣະວິນຍານບໍຣິສຸດຂອງພຣະອົງເທົ່ານັ້ນ ຈຶ່ງສາມາດຊ່ວຍລ້າງເຮົາໃຫ້ພົ້ນຈາກຄວາມຜິດບາບໄດ້.

*ຖາມ:* 73. ຖ້າຢ່າງນັ້ນ ເປັນຫຍັງພຣະວິນຍານບໍຣິສຸດ ຈຶ່ງເອີ້ນການຮັບດ້ວຍນ້ຳນັ້ນ ເປັນການ 4.073
ເກີດໃໝ່ ແລະເປັນການລ້າງບາບ?

*ຕອບ:* ພຣະເຈົ້າເອີ້ນແນວນີ້ ເພື່ອຈົ່ງປະສົງອັນຍິ່ງໃຫຍ່ຂອງພຣະອົງ. ພຣະອົງບໍ່ພຽງສອນເຮົາວ່າ ຫາກນ້ຳນັ້ນສາມາດລ້າງ ສິ່ງສົກກະປົກອອກຈາກຮ່າງກາຍຂອງເຮົາ, ຄວາມຜິດບາບຂອງເຮົາກໍຖືກລ້າງດ້ວຍພຣະໂລຫິດ ແລະພຣະວິນຍານແຫ່ງພຣະຄຣິສ ແລະທີ່ສຳຄັນກວ່ານັ້ນອີກກໍຄື ຄຳປະຕິຍານຂອງພຣະອົງ ແລະສັນຍາລັກດັ່ງກ່າວນີ້ ພຣະອົງຊົງຕ້ອງການ ໃຫ້ຄວາມໝັ້ນໃຈ ແກ່ເຮົາວ່າ ພວກເຮົາໄດ້ຖືກຊຳຣະລ້າງຄວາມຜິດບາບເໝືອນກັບທີ່ເຮົາລ້າງຄວາມເປື້ອນເປິະອອກຈາກຕົວເຮົາດ້ວຍນ້ຳນັ້ນແຫຼະ.

*ຖາມ:* 74. ເດັກໆກໍສາມາດຮັບສິນບັບຕິສມາບໍ? 4.074

*ຕອບ:* ແມ່ນອນ, ເພາະພວກເຂົາ ກໍເໝືອນກັບພໍ່ແມ່ຂອງເຂົາດ ໄດ້ນອນຢູ່ໃນພຣະສັນຍາ ແລະເປັນໄພ່ພົນຂອງພຣະເຈົ້າ. ໃນຖານະທີ່ທັງສອງຢ່າງຄື ການໄຖ່ນັ້ນມີມາຍ້ອນພຣະໂລຫິດຂອງພຣະຄຣິສ ແລະຂອງປະທານໃຫ້ມີຄວາມເຊື່ອນັ້ນ ມາຈາກພຣະວິນຍານບໍຣິສຸດ ແມ່ນພຣະສັນຍາຕໍ່ເດັກເຫຼົ່ານີ້ບໍ່ຕ່າງຫຍັງກັບພໍ່ແມ່ຂອງເຂົາ. ການບັບຕິສມາຂອງເດັກນັ້ນ ກໍເປັນສັນຍາລັກແຫ່ງພັນທະສັນຍາ,

ໃນການມີສ່ວນກັບພຣະຄຣິສ ແລະແຍກອອກຈາກເດັກທີ່ບໍ່ມີຄວາມເຊື່ອທັງຫຼາຍນັ້ນ. ສິ່ງນີ້ໄດ້ມີມາໃນພຣະຄຳພີເດີມໂດຍການເຂົ້າພິທີຕັດ. ໃນພຣະຄຳພີໃໝ່ ການບັບຕິສມານີ້ ໄດ້ກາຍເປັນປະເພນີປະຕິບັດແທນ.

## ພິທີສິນມະຫາສະໜິດ

## ວັນແຫ່ງພຣະເຈົ້າ ນີ້ທີ 28

*ຖາມ:* 75. ທ່ານໄດ້ຖືກກ່າວເຕືອນ ແລະຖືກໝັ້ນໃຈ ໃນການທີ່ທ່ານມີສ່ວນຮ່ວມໃນພິທີສິນມະຫາສະໜິດ ໃນການວາຍພຣະຊົນຂອງພຣະຄຣິສທີ່ກາງແຂນ ແລະມີສ່ວນໃນພຣະອົງ ແນວໃດ? 4.075

*ຕອບ:* ໃນທຳນອງນີ້ ຄື: ພຣະຄຣິສໄດ້ຊົງສັ່ງຂ້າພະເຈົ້າ ແລະພວກທີ່ເຊື່ອໃນພຣະອົງທຸກຄົນ ໃຫ້ຮັບປະທານເຂົ້າຈີ່ທີ່ຫັກນັ້ນ, ແລະດື່ມຈາກຈອກນັ້ນ ເພື່ອເປັນການຣະນຶກເຖິງພຣະອົງ. ດ້ວຍເຫດການນີ້, ພຣະອົງຊົງສັນຍາວ່າ ພຣະກາຍຂອງພຣະອົງທີ່ຖືກ ທໍຣະມານທີ່ໄມ້ກາງແຂນເພື່ອຂ້າພະເຈົ້າ, ແລະພຣະໂລຫິດຂອງພຣະອົງໄດ້ຫຼັ່ງໄຫຼເພື່ອຂ້າພະເຈົ້າ, ດັ່ງທີ່ຂ້າພະເຈົ້າໄດ້ເຫັນຢ່າງ ຈະແຈ້ງໃນການທີ່ເຂົ້າຈີ່ຂອງພຣະເຈົ້າໄດ້ຈີກຫັກອອກເພື່ອຂ້າພະເຈົ້າ, ແລະຈອກນີ້ ໄດ້ມີສ່ວນໃນຂ້າພະເຈົ້າ. ເຊັ່ນດຽວກັນ ພຣະອົງໄດ້ຊົງສັນຍາວ່າ ພຣະອົງຈະຊົງລ້ຽງເກືອຈິດວິນຍານຂອງຂ້າພະເຈົ້າ ໃຫ້ໄດ້ຮັບຊີວິດອັນຕລອດໄປເປັນນິດ ດ້ວຍພຣະກາຍ ແລະພຣະໂລຫິດຂອງພຣະອົງ ໃນຂະນະທີ່ຂ້າພະເຈົ້າຮັບເອົາສິ່ງດັ່ງກ່າວຈາກມືຂອງອາຈານ ແລະໂດຍການຊີມຣົດ ເຂົ້າຈີ່ແລະນ້ຳຈາກຈອກຂອງພຣະເຈົ້ານັ້ນ ເປັນສັນຍາລັກ ແຫ່ງພຣະກາຍແລະພຣະໂລຫິດຂອງພຣະຄຣິສ.

*ຖາມ:* 76. ຄຳວ່າ ຮັບປະທານພຣະກາຍ ແລະດື່ມພຣະໂລຫິດຂອງພຣະຄຣິສ ໝາຍຄວາມວ່າແນວໃດ? 4.076

*ຕອບ:* ສິ່ງນີ້ ບໍ່ພຽງແຕ່ປະກອບດ້ວຍຄວາມເຊື່ອໝັ້ນໃນໃຈ ຕໍ່ການທໍຣະມານ ແລະການວາຍພຣະຊົນຂອງພຣະຄຣິສເທົ່ານັ້ນ, ແຕ່ດ້ວຍສິ່ງນີ້ ເຮົາຈຶ່ງໄດ້ຮັບການອະພັຍໂທດບາບ ແລະມີຊີວິດອັນຕລອດໄປເປັນນິດນິດ. ພ້ອມນັ້ນ, ມັນເປັນການມີສ່ວນ ໃນພຣະກາຍຂອງພຣະອົງ ໂດຍພຣະວິນຍານບໍຣິສຸດ ທີ່ຝັງຮາກຢູ່ໃນພຣະຄຣິສ ແລະຢູ່ໃນພວກເຮົາ, ຊຶ່ງເຖິງແມ່ນພຣະອົງຈະ ຢູ່ສວັນແລະພວກເຮົາຍັງຢູ່ໃນໂລກມະນຸດກໍຕາມພວກເຮົາກໍບໍ່ນ້ອຍໄປກວ່າ ການມີຊີ້ນ ແລະກະດູກເໝືອນພຣະອົງດ ຊຶ່ງໄດ້ຖືກດຳຣົງຊີວິດ ແລະປົກຄອງເບິ່ງແຍງໂດຍພຣະວິນຍານບໍຣິສຸດ, ເໝືອນດັ່ງທີ່ ອະວັຍະວະຂອງເຮົາໄດ້ຖືກປົກຄອງດ້ວຍວິນຍານອັນນຶ່ງອັນດຽວ.

*ຖາມ:* 77. ພຣະຄຣິສໄດ້ສັນຍາວ່າ ພຣະອົງຈະລ້ຽງເກືອຜູ້ທີ່ເຊື່ອ ດ້ວຍພຣະກາຍ ແລະພຣະໂລຫິດຂອງພຣະອົງ ໃນເວລາທີ່ເຂົາຮັບປະທານເຂົ້າຈີ່ ແລະດື່ມຈາກຈອກນີ້ ຢູ່ໃສ? 4.077

*ຕອບ:* ໃນພຣະທັມໃນການຮັບສິນມະຫາສະໜິດທີ່ວ່າ: ພຣະເຢຊູຄຣິສ, ໃນຄືນທີ່ພຣະອົງຊົງຖືກທໍຣະຍົດນັ້ນພຣະອົງຊົງຈັບເຂົ້າຈີ່, ແລະຫຼັງຈາກຂອບພຣະຄຸນແລ້ວ ພຣະອົງຊົງຫັກເຂົ້າຈີ່ ແລ້ວຊົງກ່າວວ່າ "ນີ້ແຫຼະຄືກາຍຂອງເຮົາ ທີ່ແຕກນ້ຳງເພື່ອທ່ານ. ຈົ່ງທຳດັ່ງນີ້ ເພື່ອເປັນການຣະນຶກເຖິງເຮົາ". ດ້ວຍອາການຢ່າງດຽວກັນ ຫຼັງຈາກຮັບປະທານອາຫານແລ້ວ ພຣະອົງໄດ້ຊົງຈັບຈອກຂຶ້ນມາແລ້ວຊົງກ່າວວ່າ

"ຈອກນີ້ ຄືພັນທະສັນຍາໃໝ່ ດ້ວຍໂລຫິດຂອງເຮົາ. ເວລາໃດກໍຕາມທີ່ທ່ານ ເຮັດ ຈົ່ງເຮັດເພື່ອເປັນການລະນຶກເຖິງເຮົາ." ໃນເວລາທີ່ທ່ານຮັບທານເຂົ້າຈີ່ ແລະດື່ມຈາກຈອກນີ້, ທ່ານກໍປະກາດການອາຍພຣະຊົນຂອງພຣະອົງ ຈົນກວ່າພຣະອົງຈະສະເດັດມາ. ຄຳສັນຍານີ້ ໄດ້ຖືກກ່າວຄືນ ໂດຍທ່ານອາຈານເປົາໂລໄດ້ກ່າວວ່າ: ໃນເວລາທີ່ພວກເຮົາອວຍພອນ "ດ້ວຍຈອກແຫ່ງພຣະພອນນີ້", ມັນຈະບໍ່ແມ່ນການມີສ່ວນໃນພຣະໂລຫິດຂອງພຣະຄຣິສບໍ? ເວລາທີ່ເຮົາຫັກເຂົ້າຈີ່ ມັນຈະບໍ່ແມ່ນການມີສ່ວນໃນພຣະກາຍຂອງພຣະອົງບໍ? ເພາະວ່າ ມີພຽງເຂົ້າຈີ່ກ້ອນດຽວ, ແຕ່ພວກເຮົາຫຼາຍຄົນ, ແຕ່ກໍເປັນ ກາຍອັນດຽວກັນ, ທັ້ງນີ້ເພາະມີເຂົ້າຈີກ້ອນດຽວ ແລະພວກເຮົາກໍແບ່ງປັນກັນຈາກເຂົ້າຈີ່ກ້ອນດຽວນັ້ນ.

## ວັນແຫ່ງພຣະເຈົ້າ ມື້ທີ 29

*ຖາມ:* 78. ເຂົ້າຈີ່ແລະນ້ຳອະງຸ່ນ ແມ່ນຮ່າງກາຍ ແລະໂລຫິດຂອງພຣະຄຣິສບໍ? 4.078

*ຕອບ:* ບໍ່ແມ່ນດອກ, ເໝືອນດັ່ງນ້ຳໃນເວລາຮັບສິນບັບຕິສມາຊຶ່ງບໍ່ໄດ້ປ່ຽນມາເປັນໂລຫິດຂອງພຣະຄຣິສ ຫຼືກາຍມາເປັນສິ່ງ ລ້າງຄວາມຜິດບາບດ້ວຍສິ່ງນັ້ນໄດ້, ແຕ່ເປັນພຽງສັນຍາລັກແຫ່ງພຣະເຈົ້າ ແລະເປັນການຢັ້ງຢືນເຖິງສິ່ງດັ່ງກ່າວນັ້ນ, ເຊັ່ນກັນ ພິທີສິນມະຫາສະໜິດ ເຂົ້າຈີ່ກໍບໍ່ສາມາດກາຍເປັນພຣະກາຍຂອງພຣະຄຣິສໄດ້, ຊຶ່ງຕາມການເອີ້ນແລ້ວ ເຮົາກໍເອີ້ນວ່າ ນີ້ ປຽບເໝືອນພຣະກາຍຂອງພຣະຄຣິສ.

*ຖາມ:* 79. ຖ້າດັ່ງນັ້ນ, ເປັນພຣະຄຣິສຈຶ່ງເອົ້າວ່າ ເຂົ້າຈີ່ແມ່ນພຣະກາຍຂອງພຣະອົງ, ແລະຈອກແມ່ນ 4.079
ໂລຫິດຂອງພຣະອົງ, ຫຼືແມ່ນພັນທະສັນຍາໃໝ່ໃນພຣະໂລຫິດຂອງພຣະອົງ, ແລະເປັນຫຍັງ ອັກຄະສາວົກເປົາໂລ ຈຶ່ງເອີ້ນພິທີສິນມະຫາສະໜິດວ່າ "ເປັນການມີສ່ວນ" ໃນພຣະກາຍແລະພຣະໂລຫິດຂອງພຣະຄຣິສ?

*ຕອບ:* ພຣະຄຣິສບໍ່ໄດ້ເອົ້າຢ່າງນີ້ ແຕ່ພຣະອົງຊົງມີຈຸດປະສົງທີ່ແຂງແຮງ ໂດຍທີ່ພຣະອົງຊົງຢາກສອນເຮົາໂດຍສິ່ງນັ້ນ ຄືວ່າ ດ້ວຍເຂົ້າຈີ່ ແລະນ້ຳອະງຸ່ນນັ້ນ ໄດ້ຄ້ຳຈຸນຊີວິດໃນປັດຈຸບັນນີ້ ດັ່ງນັ້ນພຣະກາຍ ແລະພຣະໂລຫິດຂອງພຣະອົງກໍເປັນອາຫານ ແລະເຄື່ອງດື່ມສຳຮັບວິນຍານຈິດຂອງເຮົາ ເພື່ອຊີວິດອັນຕລອດໄປເປັນນິດ. ຍິ່ງໄປກວ່ານັ້ນ ພຣະອົງຊົງຕ້ອງການໃຫ້ຄວາມ ໝັ້ນໃຈແກ່ເຮົາໃນການໄດ້ເຫັນສັນຍາລັກ ແລະຄຳສັນຍາ ທີ່ພວກເຮົາໄດ້ເຂົ້າສ່ວນໃນພຣະກາຍ ແລະພຣະໂລຫິດຂອງພຣະອົງ ໂດຍການຊົງນຳຂອງພຣະວິນຍານບໍຣິສຸດ ໃນເວລາທີ່ເຮົາຮັບເອົາສ່ວນແບ່ງໃສ່ປາກຂອງເຮົາ ເພື່ອຣະນຶກເຖິງພຣະອົງ, ແລະການທໍຣະມານທຸກຢ່າງ ແລະການອາຍພຣະຊົນຂອງພຣະອົງ ໄດ້ມີສ່ວນໃນເຮົາ ເໝືອນດັ່ງທີ່ພວກເຮົາໄດ້ຮັບການທໍຣະມານ ແລະການຖືກຕອບແທນຢ່າງສາສົມນັ້ນ ໄດ້ເກີດກັບເຮົາເອງ.

## ວັນແຫ່ງພຣະເຈົ້າ ມື້ທີ 30

*ຖາມ:* 80. ແມ່ນຫຍັງຄືຄວາມແຕກຕ່າງຣະຫວ່າງ ສິນມະຫາສະໜິດ ກັບການຊຸມນຸມຂອງຄຸນພໍ່? 4.080

*ຕອບ:* ສິນມະຫາສະໜິດ ໄດ້ຢັ້ງຢືນໃຫ້ເຮົາຮູ້ວ່າ ເຮົາໄດ້ຮັບການອະພັຍໂທດບາບແລ້ວ ໂດຍການອາຍພຣະຊົນຂອງພຣະ ເຢຊູຄຣິສ ຊຶ່ງພຣະອົງໄດ້ທຳສຳເຣັດໂດຍພຣະອົງເອງທີ່ໄມ້ກາງແຂນນັ້ນ ສຳຣັບທຸກຄົນ, (ແລະໂດຍຜ່ານພຣະວິນຍານບໍຣິສຸດ ພວກເຮົາໄດ້ມີສ່ວນໃນພຣະຄຣິສ, ຊຶ່ງເວລານີ້ ຊົງສະຖິດຢູ່ສວັນ

ທັງຮ່າງກາຍຂອງພຣະອົງ ທີ່ກ້ຳພຣະຫັດຂວາຂອງພຣະບິດາເຈົ້າ ແລະເປັນບ່ອນທີ່ສົມຄວນແກ່ການນະມັສການ. ແຕ່ການຮອນກຸ່ມຂອງຄຸມພໍ່ນັ້ນ ສອນໃຫ້ຮູ້ເຖິງວ່າ ການມີຊີວິດ ແລະການຕາຍ ບໍ່ໄດ້ມີການອະພັຍໂທດບາບດ້ວຍການຕາຍຂອງພຣະເຢຊູຄຣິສນັ້ນ ນອກຈາກວ່າພຣະຄຣິສຈະຕ້ອງມອບການອະພັຍນັ້ນໃຫ້ພວກເຂົາອີກ ທຸກໆວັນ ໂດຍທາງຄຸມພໍ່ນັ້ນ (ແລະເຂົາຖືວ່າ ຮ່າງກາຍຂອງພຣະຄຣິສປະກອບເປັນເຂົ້າຈີ່ ແລະນ້ຳອະງຸ່ນ ແລະເປັນສິ່ງທີ່ຄວນນະມັສການຂອງພວກເຂົາ). ດ້ວຍເຫດນີ້ ການໂຮມຊຸມນຸມຂອງຄຸມພໍ່ ໂດຍພື້ນຖານແລ້ວ ໄດ້ປະຕິເສດ ພຣະອົງໃນການຖວາຍທຸກຢ່າງ ແລະການທໍຣະມານຂອງພຣະເຢຊູຄຣິສ (ແລະການນັບຖືຮູບເຄົາຣົບແບບນີ້ ຄວນຖືກລົງໂທດ).

*ຖາມ:* 81. ໃຜແດ່ທີ່ສົມຄວນເຂົ້າຮ່ວມໂຕະຂອງພຣະເຈົ້າ? 4.081

*ຕອບ:* ທຸກຄົນທີ່ເບື່ອໜ່າຍຕໍ່ຄວາມຜິດບາບຂອງຕົນເອງ, ແລະທີ່ຍອມຮັບຮູ້ວ່າ ຄວາມບາບ ແລະການອ່ອນແອຂອງເຂົານັ້ນ ໄດ້ຖືກໃຫ້ອະພັຍແລ້ວ ດ້ວຍການຖືກທໍຣະມານ ແລະການອາຍພຣະຊົນຂອງພຣະຄຣິສ, ພ້ອມທັງບຸກຄົນທີ່ ຕ້ອງການເພີ່ມເຕີມ ຄວາມເຊື່ອຂອງຕົນເອງໃນການດຳຣົງຊີວິດ. ການບໍ່ສຳນຶກຜິດ ແລະການໜ້າໄວ້ຫຼັງຫຼອກ ການການກິນແລະດື່ມ ຈະເປັນເຫດ ໃຫ້ຕົນເອງຖືກພິພາກສາລົງໂທດ.

*ຖາມ:* 82. ພວກທີ່ສະແດງຕົນເອງວ່າ ເປັນພວກທີ່ບໍ່ເຊື່ອ ແລະເປັນສັດຕຣູຕໍ່ພຣະເຈົ້າ 4.082
ໂດຍການສາຣະພາບຍອມຮັບ ແລະການດຳຣົງຊີວິດຂອງເຂົາ ຈະຮັບສິນນີ້ໄດ້ບໍ?

*ຕອບ:* ບໍ່ໄດ້, ເພາະ ຫາກທຳເຊັ່ນນັ້ນ ພຣະສັນຍາຂອງພຣະເຈົ້າກໍຈະຕ້ອງຖືກດູໝິ່ນ ແລະຄວາມໂກດຮ້າຍຂອງພຣະເຈົ້າກໍຈະ ຕົກເທິງຄຣິສຕະຈັກນັ້ນ. ອີງໃສ່ ຣະບຽບການຂອງພຣະຄຣິສ ແລະອັກຄະສາວົກຂອງພຣະອົງແລ້ວ, ຄຣິສຕະຈັກຂອງຊາວ ຄຣິສຕຽນຈະຕ້ອງຢູ່ພາຍໃຕ້ການຮັບຜິດຊອບ, ໂດຍແມ່ນຫ້ອງການທີ່ເປັນກຸນແຈສຳຄັນຂອງຄຣິສຕະຈັກນັ້ນ ຈະຕ້ອງຍົກເວັ້ນ ບຸກຄົນເຫຼົ່ານັ້ນຈົນກວ່າພວກເຂົາແກ້ໄຂປ່ຽນແປງຊີວິດຂອງພວກເຂົາ.

## ວັນແຫ່ງພຣະເຈົ້າ ນີ້ທີ 31

*ຖາມ:* 83. ຫ້ອງການທີ່ເປັນກຸນແຈສຳຄັນຂອງຄຣິສຕະຈັກນັ້ນຄືຫຍັງ? 4.083

*ຕອບ:* ຄືການເທສນາພຣະທັມອັນສັກສິດ ແລະວິນັຍຂອງຊາວຄຣິສຕຽນ. ທັງສອງຢ່າງນີ້ ໝາຍເຖິງແຜ່ນດິນສວັນຂອງພຣະເຈົ້າ ໄດ້ຖືກເປີດອອກ ສຳຣັບຜູ້ທີ່ເຊື່ອ ແລະປິດຕໍ່ຜູ້ທີ່ບໍ່ເຊື່ອ.

*ຖາມ:* 84. ປະຕູສວັນເປີດ ແລະປິດ ໂດຍການເທສນາພຣະທັມ ໄດ້ແບບໃດ? 4.084

*ຕອບ:* ໂດຍວິທີນີ້: ປະຕູສວັນໄດ້ເປີດອອກ ໃນເວລາທີ່ສິ່ງນັ້ນໄດ້ຖືກປ່າວປະກາດ ແລະເປີດເຜີຍຕໍ່ພວກຄົນທີ່ເຊື່ອຄົນຜູ້ດຽວ ຫຼືໝົດທຸກຄົນ ໂດຍອີງໃສ່ຄຳສັ່ງຂອງພຣະຄຣິສທີ່ວ່າ ໃນທັນທີ ທີ່ເຂົາຮັບເອົາ ພຣະສັນຍາຂອງພຣະອົງໃນພຣະຄຳພີ ດ້ວຍຄວາມເຊື່ອໂດຍຈິງໃຈແລ້ວ ຄວາມຜິດບາບຂອງເຂົາທັງໝົດຈະຖືກອະພັຍໂດຍພຣະເຈົ້າ ດ້ວຍພຣະຄຸນຂອງພຣະຄຣິສ. ກົງກັນຂ້າມ, ຄວາມໂກດຮ້າຍຂອງພຣະເຈົ້າ ແລະລົງໂທດທີ່ມີຮັນດອນຂອງພຣະອົງ ຈະຕົກລົງເທິງພວກທີ່ບໍ່ເຊື່ອ, ພວກໜ້າໄວ້ ຫຼັງຫຼອກຫາກເຂົາບໍ່ຍອມຖິ້ມໃຈເກົ່າ

ເອົາໃຈໃໝ່. ອີງໃສ່ຄຳພະຍານແຫ່ງພຣະທັມຄຳພີຂອງແລ້ວ ພຣະເຈົ້າຈະພິພາກສາບຸກຄົນ ແລະຜູ້ອື່ນໆ ທັ້ງຊີວິດນີ້ ແລະຊີວິດໜ້າ.

*ຖາມ:* 85. ປະຕູສວັນປິດ ແລະເປີດໂດຍວິນັຍຂອງຄຣິສຕຽນໄດ້ແບບໃດ? 4.085

*ຕອບ:* ໂດຍວິທີນີ້: ພຣະຄຣິສຊົງສັ່ງວ່າ ຜູ້ທີ່ໃຊ້ນາມຊື່ຂອງຄຣິສຕຽນ ຢ່າງບໍ່ຖືກຕ້ອງ ຈະເປັນທາງທິສດີ ຫຼືການປະຕິບັດກໍດີ ຈະຕ້ອງໄດ້ຖືກຕັກເຕືອນຖາມອ້າຍນ້ອງ. ຫາກເຂົາບໍ່ຍອມປ່ຽນແປງຄວາມຜິດພາດ ຫຼືສິ່ງຊົ່ວຮ້າຍນັ້ນ, ຈະຕ້ອງຣາຍງານໃຫ້ ຄຣິສຈັກຊາບ ແລະຕໍ່ຜູ້ທີ່ຖືກສະຖາປະນາໃນຄຣິສຕະຈັກສຳຣັບວຽກງານນີ້. ຫຼັງຈາກຕັກເຕືອນແລ້ວແຕ່ເຂົາບໍ່ປ່ຽນແປງ, ພວກເຂົາຈະຕ້ອງຖືກຫ້າມໃນການມີສ່ວນໃນພິທີສິນລະຫາສະໜິດ ແລະຈະຖືກຂັບໄລ່ອອກຈາກກຸ່ມຄຣິສຕະຈັກ ແລະພຣະເຈົ້າ ເອງກໍຈະຂັບໄລ່ເຂົາອອກຈາກຣາຊອານາຈັກຂອງພຣະອົງ. ເຖິງແນວໃດກໍຕາມ ຫາກເຂົາໃຫ້ຄຳໝັ້ນສັນຍາ ແລະສະແດງໃນ ການປັບປຸງແກ້ໄຂຕົນເອງຢ່າງຈິງຈັງແລ້ວ ພວກເຂົາຄວນໄດ້ຮັບເຂົ້າສູ່ຄຣິສຕະຈັກຂອງພຣະຄຣິສຄືນອີກໃໝ່.

# ພາກ ສາມ

## ການຂອບພຣະຄຸນ

## ວັນແຫ່ງພຣະເຈົ້າ ນື້ທີ 32

*ຖາມ:* 86. ຖ້າວ່າເຮົາໄດ້ຮັບການໄຖ່ໃຫ້ພົ້ນຈາກບາບແລະການຊົ່ວຮ້າຍ ໂດຍພຣະຄຸນຂອງພຣະຄຣິສ ໂດຍບໍ່ຕ້ອງທຳດີຫຼັງດ້ວຍຕົນເອງ, ເປັນຫຼັງເຮົາຈຶ່ງຕ້ອງທຳດີ ? 4.086

*ຕອບ:* ທັ້ງນີ້ ເພາະພຣະຄຣິສໄດ້ຊົງໄຖ່ພວກເຮົາ ດ້ວຍພຣະໂລຫິດ ແລະສ້າງໃຫ້ເຮົາເປັນຄົນໃໝ່ໂດຍພຣະວິນຍານຂອງ ພຣະອົງໃຫ້ເຮົາມີຮູບແບບເໝືອນພຣະອົງ, ດັ່ງນັ້ນ, ຊີວິດຂອງເຮົາທັງໝົດ ເຮົາອາດສະແດງຕົວເປັນຜູ້ທີ່ຮູ້ບຸນຄຸນພຣະເຈົ້າ ໃນຄວາມດີຂອງພຣະອົງ ເພື່ອພຣະອົງຈະໄດ້ຮັບກຽດ ໂດຍທາງພວກເຮົາ, ແລະຈາກນັ້ນ ພວກເຮົາຈະສາມາດຮັບປະກັນໃນ ຄວາມເຊື່ອ ໂດຍໝາກຜົນທີ່ອອກມານັ້ນ ແລະໂດຍການສະແດງອຸປນິສັຍຂອງເຮົານັ້ນ ຈະສາມາດເອົາຊະນະຄົນຂ້າງຄຽງໄດ້.

*ຖາມ:* 87. ພວກທີ່ບໍ່ກັບຫາພຣະເຈົ້າ ຈາກການບໍ່ຮູ້ບຸນຄຸນ, ການທຳຜິດບາບ ຈະພົ້ນບໍ? 4.087

*ຕອບ:* ບໍ່ພົ້ນແນ່ນອນ. ພຣະຄຳພີໄດ້ບອກວ່າ "ທ່ານກໍຮູ້ແລ້ວວ່າ ພວກອະທັມຈະບໍ່ມີສ່ວນໃນແຜ່ນດິນສວັນຂອງພຣະເຈົ້າ. ຢ່າຫຼົງເລີຍ: ພວກກັບຖືຮູບເຄົາຣົບ ຫຼືພວກລ່ວງປະເວນີ, ພວກທີ່ມີຄວາມຜິດໃນຖານຫຼີ້ນຊູ້ ຫຼືຫຼີ້ນເພດດຽວກັນ, ພວກຂີ້ລັກ ນັກຊີກ ພວກຂີ້ເມົາ ພວກໃສ່ຮ້າຍປ້າຍສີຄົນອື່ນ ພວກນັກສໍ້ໂກງ, ພວກເຫຼົ່ານີ້ ຈະບໍ່ມີສ່ວນໃນແຜ່ນດິນສວັນຂອງພຣະເຈົ້າ."

## ວັນແຫ່ງພຣະເຈົ້າ ນື້ທີ 33

*ຖາມ:* 88. ມັນຈັກພາກສ່ວນ ທີ່ໝາຍເຖິງການກັບໃຈ ປ່ຽນແປງຂອງມະນຸດ ? 4.088

*ຕອບ:* ມີສອງພາກສ່ວນ: ຕາຍໃນຊີວິດເກົ່າຂອງຕົນ ແລະເກີດມາເປັນຄົນໃໝ່.

ຖາມ: 89. ຕາຍໃນຊີວິດເກົ່າຂອງຄົນໝາຍຄວາມວ່າຢ່າງໃດ ? 4.089

ຕອບ: ຕ້ອງມີຄສາມເສົ້າໃຈຕໍ່ຄວາມຜິດບາບຂອງເຮົາ ແລະກຽດຊັງຄວາມຜິດບາບນັ້ນ ແລະອອກໜີຈາກບາບນັ້ນ.

ຖາມ: 90. ການເກີດມາໃໝ່ ຄືແນວໃດ ? 4.090

ຕອບ: ມີຄວາມຊົມຊື່ນຍິນດີໃນພຣະເຈົ້າໂດຍທາງພຣະຄຣິສ ແລະມີຈຸດປະສົງຢ່າງແຮງກ້າທີ່ຈະດຳຣົງຊີວິດ ໃຫ້ເປັນໄປຕາມນ້ຳພຣະທັຍພຣະເຈົ້າ ໃນການທຳດີທຸກຢ່າງ.

ຖາມ: 91. ແຕ່ການທຳດີນັ້ນ ແມ່ນຫຍັງ ? 4.091

ຕອບ: ແມ່ນສິ່ງທີ່ທຳດ້ວຍຄວາມເຊື່ອທີ່ແທ້ຈິງເທົ່ານັ້ນ ໂດຍອີງຕາມພຣະບັນຍັດຂອງພຣະເຈົ້າ ແລະເພື່ອພຣະກິດຕິຄຸນ ຂອງພຣະອົງ ຊຶ່ງບໍ່ແມ່ນໂດຍອີງໃສ່ຄວາມຄິດຂອງເຮົາເອງ ຫຼືອີງໃສ່ປະເພນີທັງຫຼາຍຂອງມະນຸດ.

## ວັນແຫ່ງພຣະເຈົ້າ ນີ້ທີ 34

ຖາມ: 92. ພຣະບັນຍັດຂອງພຣະເຈົ້າ ແມ່ນຫຍັງ ? 4.092

ຕອບ: ພຣະເຈົ້າໄດ້ຊົງກ່າວພຣະທັມຂອງພຣະອົງດັ່ງນີ້:

ຂໍ້ທີ 1

"ເຮົາຄືພຣະເຈົ້າຂອງເຈົ້າ ຜູ້ນຳເຈົ້າອອກຈາກດິນແດນເອຢິບຄືຈາກດິນແດນທີ່ເຈົ້າເຄີຍເປັນຂ້ອຍຂ້ານັ້ນ ຢ່າມີພຣະອື່ນ ນອກຈາກເຮົາເລີຍ."

ຂໍ້ທີ 2

"ຢ່າເຮັດຮູບເຄົາຣົບສຳຣັບຕົນ ເປັນຮູບສິ່ງໃດຊຶ່ງມີຢູ່ໃນຟ້າເບື້ອງເທິງ ຫຼືເທິງເທິງແຜ່ນດິນເບື້ອງລຸ່ມ ຫຼືໃນນ້ຳໃຕ້ ແຜ່ນດິນ. ຢ່າຂາບໄຫວ້ຮູບເຫຼົ່ານັ້ນ ເພາະເຮົາຄືພຣະເຈົ້າຂອງເຈົ້າ ເປັນພຣະເຈົ້າທີ່ຫວງແຫນ ໃຫ້ໂທດບິດາ ຕົກທອດໄປເຖິງ ລູກຫຼານຂອງຜູ້ທີ່ຊັງເຮົາຈົນເຖິງສາມຊົ່ວສີ່ຊົ່ວອາຍຸຄົນ ແຕ່ເຮົາສະແດງຄວາມຮັກໝັ້ນຄົງຂອງເຮົາ ແລະປະຕິບັດຕາມບັນຍັດ ຂອງເຮົາຈົນເຖິງພັນຊົ່ວອາຍຸຄົນ."

ຂໍ້ທີ 3

ຢ່າອອກພຣະນາມຂອງພຣະເຈົ້າຢ່າງເປົ່າໆ ເພາະຜູ້ທີ່ອອກພຣະນາມຂອງພຣະອົງຢ່າງບໍ່ສົມຄວນນັ້ນ ພຣະເຈົ້າຈະຊົງ ຖືວ່າບໍ່ມີໂທດ ກໍວ່າບໍ່ໄດ້.

ຂໍ້ທີ 4

ຈົ່ງຣະນຶກເຖິງວັນສະບາໂຕ ຖືເປັນວັນບໍຣິສຸດ ຈົ່ງເຮັດການທັ້ງສິ້ນຂອງເຈົ້າຫົກວັນ ແຕ່ວັນທີເຈັດນັ້ນ ເປັນວັນສະບາໂຕ ຂອງພຣະເຈົ້າ ໃນວັນນັ້ນ ຢ່າເຮັດການງານໃດໆ ບໍ່ວ່າເຈົ້າ ຫຼືລູກຊາຍຍິງຂອງເຈົ້າ ຫຼືຂ້ອຍຂ້າຂອງເຈົ້າ ຫຼືສັດໃຊ້ວຽກການ ຂອງເຈົ້າ ຫຼືແຂກທີ່ອາສັຍຢູ່ໃນປະຕູເມືອງຂອງເຈົ້າ. ເພາະຫົກວັນພຣະເຈົ້າຊົງສ້າງຟ້າສວັນແລະແຜ່ນດິນໂລກ ທະເລ ແລະສັພສິ່ງຊຶ່ງມີຢູ່ໃນທີ່ເຫຼົ່ານີ້ ແຕ່ວັນທີເຈັດຊົງພັກ ເພາະສັນນັ້ນ ພຣະເຈົ້າຊົງອວຍພຣະພອນວັນສະບາໂຕ ແລະຊົງຕັ້ງວັນນັ້ນ ໄວ້ເປັນວັນບໍຣິສຸດ.

ຂໍ້ທີ 5

ຈົ່ງໃຫ້ກຽດບິດາມານດາຂອງເຈົ້າ ເພື່ອອາຍຸຂອງເຈົ້າຈະຍືນນານເທິງແຜ່ນດິນ ຊຶ່ງພຣະເຈົ້າຂອງເຈົ້າປະທານແກ່ເຈົ້າ

ຂໍ້ທີ 6

ຢ່າຂ້າຄົນ

ຂໍ້ທີ8

ຢ່າຫຼິ້ນຊູ້ຈາກຜົວເມຍ

ຂໍ້ທີ 9

ຢ່າເປັນພະຍານເທັດໃສ່ຮ້າຍເພື່ອນບ້ານ

ຂໍ້ທີ 10

ຢ່າໂລບເອົາຄົວເຮືອນຂອງເພື່ອນບ້ານ ຢ່າໂລບເອົາພັຣຍາຂອງເພື່ອນບ້ານ ຫຼືຂ້ອຍຂ້າຂອງເຂົາ ຫຼືງົວລໍຂອງເຂົາ ຫຼືສິ່ງໃດໆ ທີ່ເປັນຂອງເພື່ອນບ້ານ.

*ຖາມ:* 93. ຂໍ້ບັນຍັດເຫຼົ່ານີ້ ແບ່ງອອກແບບໃດ? 4.093

*ຕອບ:* ແບ່ງອອກເປັນສອງພາກສ່ວນ, ສີ່ຂໍ້ທຳອິດ ແມ່ນສອນເຮົາໃນການດຳຣົງຊີວິດ ໃນການພົວພັນກັບພຣະເຈົ້າ ແລະຫົກຂໍ້ສຸດທ້າຍ ແມ່ນສິ່ງທີ່ເຮົາຕ້ອງປະຕິບັດຕໍ່ເພື່ອນບ້ານຂອງເຮົາ.

*ຖາມ:* 94. ພຣະເຈົ້າຊົງມີຂໍ້ກຳໜົດແນວໃດ ໃນຂໍ້ທີ ນຶ່ງ. 4.094

*ຕອບ:* ຂ້າພະເຈົ້າຕ້ອງອອກໜີຈາກການຫຼິ້ນຊູ້, ໝໍຜີ, ການໂອ້ໂຖງ, ໃນການນະມັສການພຣະອື່ນ ຫຼືສິ່ງຊົງສ້າງອື່ນໆ ເພາະຂ້າພະເຈົ້າຈະສ່ຽງຕໍ່ການສູນເສັຽຄວາມພົ້ນ. ຂ້າພະເຈົ້າ ຈະຕ້ອງຍອມຮັບເອົາພຣະເຈົ້າອົງທ່ຽງແທ້ພຽງອົງດຽວ, ໄວ້ວາງໃຈ ແລະຮັກພຣະອົງ, ຢຳນກົວ ແລະ ໃຫ້ກຽດພຣະອົງ ດ້ວຍສຸດຈິດສຸດໃຈ. ເວົ້າຫຍໍ້ໆ ກໍຄື, ຂ້າພະເຈົ້າຕ້ອງຫັນຫຼັງໃຫ້ກັບທຸກສິ່ງ ທີ່ຊົງສ້າງ ແທນທີ່ຈະທຳສິ່ງເລັກນ້ອຍທີ່ຜິດກັບພຣະປະສົງຂອງພຣະອົງ.

*ຖາມ:* 95. ການນັບຖືຮູບເຄົາຣົບແມ່ນຫຍັງ? 4.095

*ຕອບ:* ແມ່ນການອາດພາບ ຫຼືການຄອບຄອງຮັກສາສິ່ງຂອງໃດນຶ່ງ ມາແທນຄວາມເຊື່ອໄວ້ວາງໃຈໃນພຣະເຈົ້າ ຫຼືເຊື່ອໃນສິ່ງເຫຼົ່ານັ້ນ ນອກເໜືອໄປຈາກພຣະເຈົ້າ ຜູ້ຊົງປະກົດພຣະອົງເອງຢູ່ໃນພຣະທັມຂອງພຣະອົງ.

## ວັນແຫ່ງພຣະເຈົ້າ ມື້ທີ 35

*ຖາມ:* 96. ພຣະເຈົ້າຮຽກຮ້ອງໃຫ້ເຮັດຫຍັງ ໃນຂໍ້ທີສອງ? 4.096

*ຕອບ:* ພວກເຮົາບໍ່ຄວນສະແດງເປັນຕົວແທນພຣະອົງ ຫຼືນະມັສການພຣະອົງ ໃນແບບວິທີອື່ນໆ ນອກຈາກສິ່ງທີ່ພຣະອົງຊົງ ສັ່ງຢູ່ໃນພຣະທັມຂອງພຣະອົງ.

ຖາມ: 97. ຖ້າດັ່ງນັ້ນ, ເຮົາບໍ່ຄວນເຮັດຮູບຫຍັງໝົດບໍ? 4.097

ຕອບ: ເຮົາບໍ່ສາມາດ ຫຼືບໍ່ຄວນອາດພາບຂອງພຣະເຈົ້າໄດ້. ສຳຣັບສິ່ງຊົງສ້າງນັ້ນເຊັ່ນກັນ ເຖິງແມ່ນເຮົາຈະສາມາດແຕ້ມຮູບ ພາບໄດ້ກໍຕາມ ພຣະເຈົ້າຊົງຫ້າມໃນການສ້າງ ຫຼືເຮັດສິ່ງໃດນຶ່ງຄ້າຍຄືສິ່ງເຫຼົ່ານັ້ນ ແລ້ວນຳມານະມັສການ ຫຼືໃຊ້ສິ່ງເຫຼົ່ານັ້ນ ເພື່ອມາເປັນເຄື່ອງຮັບໃຊ້ພຣະອົງ.

ຖາມ: 98. ແຕ່ວ່າ ຮູບພາບບໍ່ແມ່ນສິ່ງຖືກໃຊ້ໃນຄຣິສຕະຈັກ ໃນການໃຊ້ໃນປຶ້ມ ເພື່ອພວກຄວນທີ່ບໍ່ໄດ້ຮໍ່າຮຽນນັ້ນບໍ? 4.098

ຕອບ: ບໍ່, ພວກເຮົາບໍ່ຄວນສະແດງຕົວເປັນຄົນສລາດຫຼາຍກວ່າພຣະເຈົ້າ ຜູ້ຊຶ່ງບໍ່ຕ້ອງການໃຫ້ໄພ່ພົນຂອງພຣະອົງໄດ້ຖືກສັ່ງ ສອນດ້ວຍຄວາມໝາຍຂອງຮູບພາບທີ່ໄຮ້ຊີວິດນັ້ນ, ແຕ່ໂດຍອາສັຍພຣະທັມອັນມີຊີວິດຂອງພຣະອົງ.

## ວັນແຫ່ງພຣະເຈົ້າ ນີ້ທີ 36

ຖາມ: 99. ຂໍ້ທີ່ສາມ ຮຽກຮ້ອງໃຫ້ເຮັດຫຍັງ? 4.099

ຕອບ: ພວກເຮົາບໍ່ຄວນໃຊ້ພຣະນາມຂອງພຣະເຈົ້າໃນການ ປ້ອຍເວນ, ໃນການກ່າວຕົວະ, ຫຼືໃນການເປັນພະຍານໂດຍບໍ່ ສົມຄວນ. ແຕ່ພວກເຮົາບໍ່ຄວນມີສ່ວນກັບການຜິດບາບທີ່ຮ້າຍແຮງນັ້ນ ໂດຍການບໍ່ປາກ ແລະສະແດງຄວາມຍິນດີຢ່າງງຽບໆ. ພວກເຮົາບໍ່ຄວນໃຊ້ພຣະນາມອັນສັກສິດຂອງພຣະເຈົ້າ ນອກຈາກ ໃຊ້ດ້ວຍຄວາມຢ້ານກົວ ແລະດ້ວຍຄວາມເຄົາຣົບ ຊຶ່ງພຣະອົງ ຈະຊົງຖືກຍອມຮັບ ແລະຊົງຖືກປະກາດດ້ວຍພວກເຮົາ, ແລະຊົງໄດ້ຮັບກຽດ ໃນຄຳທຸກຄຳເວົ້າ ແລະການກະທຳຂອງເຮົາ.

ຖາມ: 100. ຖ້າດັ່ງນັ້ນ ມັນເປັນການບາບຢ່າງຮ້າຍແຮງບໍ ໃນການໝິ່ນປະໝາດພຣະນາມຂອງພຣະເຈົ້າໂດຍການໃຊ້ສາບແຊ່ງ ແລະໃຫ້ສັດສາບານ, ພຣະເຈົ້າຈະຄຽດຮ້າຍຕໍ່ບຸກຄົນທີ່ບໍ່ພະຍາຍາມປ້ອງກັນ ແລະຂັດຂວາງການກະທຳເຊັ່ນນັ້ນ ເທົ່າທີ່ເຂົາສາມາດກະທຳໄດ້ ? 4.100

ຕອບ: ແນ່ນອນ, ຈະບໍ່ມີຄວາມຜິດບາບໃດໆທີ່ຈະຍິ່ງໃຫຍ່ ຫຼືທ້າທາຍ ຕໍ່ການລົງໂທດຂອງພຣະອົງ ໄປກວ່າການດູໝິ່ນພຣະນາມຂອງພຣະອົງ. ນີ້ຈຶ່ງເປັນສາຍເຫດໃຫ້ພຣະອົງລົງໂທດ ສິ່ງນີ້ເຖິງຕາຍ.

## ວັນແຫ່ງພຣະເຈົ້າ ນີ້ທີ 37

ຖາມ: 101. ແຕ່ບໍ່ແມ່ນພວກເຮົາຕ້ອງສາບານຕໍ່ໜ້າສານ ໂດຍໃຊ້ພຣະນາມຂອງພຣະອົງ ເພື່ອສະແດງຄວາມຈິງໃຈໃນເຫດການຕ່າງໆນັ້ນບໍ? 4.101

ຕອບ: ແນ່ນອນ, ໃນເວລາທີ່ ພວກຜູ້ປົກຄອງທາງໂລກໄດ້ຮຽກຮ້ອງສິ່ງນີ້ໃນວຽກງານຂອງເຂົາ, ຫຼືໃນເວລາທີ່ສິ່ງນັ້ນ ຕ້ອງການທີ່ຈະຮັກສາໄວ້ ແລະສົ່ງເສີມຄວາມຈົງຮັກພັກດີ ແລະຄວາມຈິງ, ເພື່ອພຣະກຽດຂອງພຣະເຈົ້າ ແລະເພື່ອພົນປະໂຫຍດ ຂອງເພື່ອນບ້ານ. ການໃຫ້ການໃນສານແບບນັ້ນ ໄດ້ມີພື້ນຖານຢູ່ໃນ

ພຣະທັມຂອງພຣະເຈົ້າ ແລະເປັນການໃຊ້ຢ່າງຖືກຕ້ອງ ໂດຍໄຜ່ພົນຂອງພຣະອົງ ໃນພຣະສັນຍາເດີມ ແລະພຣະສັນຍາໃໝ່.

*ຖາມ:* 102. ພວກເຮົາຈະບໍ່ສາບານໂດຍໃຊ້ນາມພຣະອື່ນ ຫຼືສິ່ງຊົງສ້າງອື່ນໆບໍ? 4.102

*ຕອບ:* ບໍ່, ເພາະວ່າ ຄໍາປະຕິຍານທີ່ຖືກຕ້ອງຕາມກົດໝາຍ ຕ້ອງມີການຮຽກຮ້ອງຕໍ່ພຣະເຈົ້າ, ເພື່ອຈະເປັນຜູ້ດຽວ ທີ່ນໍາພາ ຈິດໃຈ ໃຫ້ສາມາດເປັນພະຍານແຫ່ງຄວາມຈິງ, ແລະຈະລົງໂທດຂ້າພະເຈົ້າຫາກຂ້າພະເຈົ້າ ປະຕິຍານຜິດ. ບໍ່ມີສິ່ງຊົງສ້າງໃດໆ ຈະໄດ້ຮັບກຽດແບບນີ້.

## ວັນແຫ່ງພຣະເຈົ້າ ວັນທີ 38

*ຖາມ:* 103. ພຣະເຈົ້າຮຽກຮ້ອງຫຍັງໃນຂໍ້ທີ 4 ? 4.103

*ຕອບ:* ນຶ່ງ, ຄືການປະການພຣະທັມ ແລະການສຶກສາຂອງຄຣິສຕຽນຈະຕ້ອງສືບຕໍ່ໄປ, ແລະຂ້າພະເຈົ້າຕ້ອງຮ່ວມ ມີໜ້າໃນ ຄຣິສຕະຈັກ, ໂດຍສະເພາະໃນວັນຂອງພຣະເຈົ້າ, ເພື່ອຈະໄດ້ຍິນພຣະທັມຂອງພຣະອົງ, ເພື່ອປະກອບສ່ວນໃນພິທີສິນສັກສິດ, ເພື່ອເອີ້ນຫາພຣະເຈົ້າໃນທີ່ຊຸມຊົນ, ແລະເພື່ອນໍາວຽກງານຄຣິສຕຽນ ຮັບໃຊ້ພວກຄົນທີ່ມີຄວາມຕ້ອງການ. ວັນທີສອງ, ຄື ຂ້າພະເຈົ້າໄດ້ຢຸດເຊົາການທໍາງານແບບຊົ່ວຮ້າຍໃນ ຕລອດຊົ່ວຊີວິດຂອງຕົນເອງ, ອະນຸຍາດໃຫ້ພຣະເຈົ້າ ໄດ້ທໍາງານໃນຂ້າພະເຈົ້າ ໂດຍທາງພຣະວິນຍານ ຂອງພຣະອົງ, ແລະເລີ່ມຕົ້ນຊີວິດຂອງຕົນໃຫ້ບໍຣິສຸດໃນວັນສະບາໂຕ ຕລອດໄປເປັນນິດ.

## ວັນແຫ່ງພຣະເຈົ້າ ນີ້ທີ 39.

*ຖາມ:* 104. ພຣະເຈົ້າຮຽກຮ້ອງຫຍັງໃນຂໍ້ທີ 5 ? 4.104

*ຕອບ:* ໃຫ້ຂ້າພະເຈົ້າສະແດງການໃຫ້ກຽດຕິຍົດ, ຄວາມຮັກ, ແລະຄວາມເຊື່ອໝັ້ນ ໃນພໍ່ ແລະແມ່ຂອງຂ້າພະເຈົ້າ ແລະຕໍ່ຜູ້ທີ່ ຖືກຕັ້ງໄວ້ໃຫ້ເປັນຜູ້ມີອໍານາດເໜືອຂ້າພະເຈົ້າ, ຂ້າພະເຈົ້າ ຕ້ອງນໍາຕົນເອງໃຫ້ມີຄວາມ ນັບຖືຢໍາເກງ ຕໍ່ຄໍາສັ່ງສອນ ແລະຣະບຽບ ວິນັຍທັງໝົດຂອງພວກເຂົາ, ແລະຂ້າພະເຈົ້າຕ້ອງສະແດງຄວາມ ອົດທົນຕໍ່ການລົ້ມເຫຼວຂອງພວກເຂົາ, ເພາະນີ້ເປັນພຣະປະສົງ ຂອງພຣະເຈົ້າທີ່ໃຫ້ເຂົາປົກຄອງພວກເຮົາ.

## ວັນແຫ່ງພຣະເຈົ້າ ນີ້ທີ 40.

*ຖາມ:* 105. ພຣະເຈົ້າຮຽກຮ້ອງຫຍັງໃນຂໍ້ທີ 6 ? 4.105

*ຕອບ:* ໃຫ້ຂ້າພະເຈົ້າບໍ່ທາຣຸນ, ກຽດຊັງ, ທໍາຮ້າຍ, ຫຼືຂ້າ ເພື່ອນບ້ານຂອງຕົນເອງ, ຈະເປັນດ້ວຍຄວາມຄິດ, ດ້ວຍການປາກເວົ້າ, ຫຼືການກະທໍາ, ຈະເປັນດ້ວຍພຶຕິກັມ, ດ້ວຍຕົນເອງ, ຫຼືໂດຍຜ່ານຄົນອື່ນ, ແຕ່ຕ້ອງຫຼີກໜີຈາກຄວາມຄິດ ໃນການແກ້ແຄ້ນທັງຫຼາຍ, ແລະຂ້າພະເຈົ້າຈະບໍ່ທໍາຮ້າຍຕົນເອງ ຫຼືຍິນດີເອົາຕົວເອງເຂົ້າສູ່ອັນຕະລາຍ. ນີ້ແຫຼະ ຈຶ່ງເປັນເຫດຜົນ ທີ່ວ່າ ພວກປົກຄອງທັງຫຼາຍ ໄດ້ມີອາວຸດ ເພື່ອປ້ອງກັນການຄາດຕະກັມຕ່າງໆ.

ຖາມ: 106. ບໍ່ແມ່ນບັນຍັດຂໍ້ນີ້ ເອົ້າສະເພາະແຕ່ການຂ້າເທົ່ານັ້ນບໍ ? 4.106

ຕອບ: ໃນການປ້ອງກັນການຄາດຕະກັມ ພຣະເຈົ້າຕ້ອງການສອນພວກເຮົາໃຫ້ຮູ້ວ່າ ພຣະອົງຊົງກຽດຊັງບໍ່ເກີດແຫ່ງການຄາດຕະກັມ ຊຶ່ງແມ່ນມາຈາກ ການອິດສາ, ກຽດຊັງ, ຄຽດຮ້າຍ, ແລະການແກ້ແຄ້ນ, ຊຶ່ງພຣະອົງຊົງຖືວ່າ ສິ່ງເຫຼົ່ານີ້ ຖືກແອບແຝງດ້ວຍການຄາດຕະກັມ.

ຖາມ: 107. ເປັນການພຽງພໍບໍ ທີ່ເຮົາບໍ່ຂ້າເພື່ອນບ້ານ ໃນວິທີໃດນຶ່ງດັ່ງກ່າວມານັ້ນ ? 4.107

ຕອບ: ບໍ່. ເພາະໃນເວລາທີ່ພຣະເຈົ້າຊົງລົງໂທດການອິສາອິສຍາ, ການກຽດຊັງ, ແລະການໂກດຮ້າຍນັ້ນ ພຣະອົງຮຽກຮ້ອງ ໃຫ້ພວກເຮົາຮັກເພື່ອນບ້ານເໝືອນຮັກເຮົາເອງ, ສະແດງຄວາມອົດທົນ, ສັນຕິ, ຄວາມສຸພາບ, ເມດຕາກະຣຸນາ, ແລະຄວາມເປັນມິດ ເຂົາ, ແລະເພື່ອປ້ອງກັນການທຳຮ້າຍເຂົາເທົ່າທີ່ເຮົາສາມາດທຳໄດ້, ແລະເຊັ່ນດຽວກັນ ພຣະອົງຊົງໃຫ້ເຮົາ ທຳດີຕໍ່ສັດຕຣູຂອງເຮົາດ້ວຍ.

## ວັນແຫ່ງພຣະເຈົ້າ ວັນທີ 41

ຖາມ: 108. ຂໍ້ທີ 7 ສອນເຮົາຫຍັງແດ່ ? 4.108

ຕອບ: ຄວາມບໍ່ບໍຣິສຸດທັງໝົດ ຈະຖືກລົງໂທດຈາກພຣະເຈົ້າ, ຊຶ່ງພວກເຮົາຕ້ອງກຽດຊັງ ເອົາມັນອອກຈາກໃຈຂອງເຮົາ, ດຳຣົງຊີວິດດ້ວຍຄວາມບໍຣິສຸດ ແລະຢ່າງມີວິນັຍ, ຈະເປັນດ້ວຍການແຕ່ງງານ ຫຼືດ້ວຍການເປັນໂສດກໍຕາມ.

ຖາມ: 109. ພຣະເຈົ້າຈະບໍ່ຫັກຫ້າມຫຍັງນອກເໜືອຈາກການຫຼິ້ນຊູ້ ແລະການເຕີບໃຫຍ່ໃນຄວາມຜິດບາບ ທີ່ກ່າວໄວ້ໃນພຣະບັນຍັດຂໍ້ນີ້ບໍ ?

ຕອບ: ໃນເມື່ອທັງສອງຢ່າງ ຄືເນື້ອກາຍຂອງເຮົາ ແລະວິນຍານຂອງເຮົາ ເປັນພຣະວິຫານຂອງພຣະວິນຍານບໍຣິສຸດ, ມັນເປັນ ພຣະປະສົງຂອງພຣະອົງ ທີ່ໃຫ້ເຮົາຕ້ອງຮັກສາສອງສິ່ງນີ້ໃຫ້ບໍຣິສຸດ ແລະປາສຈາກມົນທິນ. ເຫດນີ້ ພຣະອົງຈຶ່ງຊົງຫັກຫ້າມ ທຸກການກະທຳທີ່ບໍ່ບໍຣິສຸດ, ກິຣິຍາ, ວາຈາ, ຄວາມຄິດ, ຄວາມຕ້ອງການ, ແລະສິ່ງໃດກໍຕາມທີ່ຊັກຈູງຄົນອື່ນໃຫ້ທຳສິ່ງເຫຼົ່ານີ້.

## ວັນແຫ່ງພຣະເຈົ້າ ມື້ທີ 42.

ຖາມ: 110. ພຣະເຈົ້າຊົງຫ້າມຫຍັງໃນຂໍ້ທີ 8 ? 4.110

ຕອບ: ພຣະອົງຊົງຫ້າມ ບໍ່ພຽງແຕ່ການລັກ ຫຼືປຸ້ນ ຕໍ່ພວກຜູ້ປົກຄອງທາງໂລກເທົ່ານັ້ນ, ແຕ່ພຣະອົງຖືວ່າ ພວກທີ່ໃຊ້ອຸບາຍ ລໍ້ລວງ ແລະພວກມີແຜນການ ທີ່ຫວັງຢາກໄດ້ຂອງເພື່ອນບ້ານມາເປັນຂອງຕົນເອງ, ຈະເປັນການໃຊ້ຄວາມຮຸນແຮງ ຫຼືດ້ວຍການ ສິດອ້າງອິງແນວໃດກໍຕາມ, ການຕວງ ແລະຊັ່ງແທກທີ່ຜິດພາດ, ການໂຄສະນາຫຼອກລວງ, ການປອມແປງເງິນຄຳ, ການເອົາດອກເບັ້ຍສູງເກີນໄປ, ຫຼືສິ່ງໃດກໍຕາມ ພຣະເຈົ້າຊົງຫ້າມ. ພຣະອົງຊົງຫ້າມທຸກການໂລບມາກ ແລະການໃຊ້ຢ່າງ ບໍ່ຖືກຕ້ອງ ແລະການຟຸມເຟືອຍຂອງປະທານຂອງພຣະອົງ.

ຖາມ: 111. ແຕ່ ພຣະເຈົ້າຊົງຕ້ອງການຫຍັງຈາກທ່ານ ໃນຂໍ້ບັນຍັດນີ້ ? 4.111

ຕອບ: ໃຫ້ຂ້າພະເຈົ້າ ທຳງານເພື່ອຜົນປະໂຫຍດຂອງເພື່ອນບ້ານ ໃນທຸກບ່ອນທີ່ຂ້າພະເຈົ້າຢູ່ ຫຼືສາມາດທຳໄດ້. ເຮັດກັບເຂົາ ເໝືອນທີ່ຂ້າພະເຈົ້າຕ້ອງການໃຫ້ຄົນອື່ນເຮັດກັບຕົນເອງ, ແລະທຳໜ້າທີ່ໃຫ້ດີ ຊຶ່ງຈະສາມາດຊ່ອຍຄົນທຸກຍາກ.

## ວັນແຫ່ງພຣະເຈົ້າ ນີ້ທີ 43

ຖາມ: 112. ຂໍ້ທີ 9 ຮຽກຮ້ອງຫຍັງແດ່ ? 4.112

ຕອບ: ບໍ່ໃຫ້ຂ້າພະເຈົ້າເປັນພະຍານເທັດຕໍ່ສູ້ຄົນອື່ນ, ປ່ຽນແປງຄຳເວົ້າຂອງຄົນອື່ນ, ນິນທາ ຫຼືໃສ່ຮ້າຍ, ຫຼືລົງໂທດຢ່າງເບົາຕໍ່ ໃຜຜູ້ນຶ່ງໂດຍບໍ່ມີການຟັງຫຍັງ. ຂ້າພະເຈົ້າຖືກຮຽກຮ້ອງໃຫ້ຫຼີກລ່ຽງ ການເອື້ອຍອີງ ແລະການສໍ້ໂກງຕໍ່ວຽກງານຂອງຜີມານ ເພື່ອບໍ່ຕົກຢູ່ໃນການພິພາກສາຂອງພຣະເຈົ້າ. ໃນສານ ແລະໃນທຸກ ເຫດການ ຂ້າພະເຈົ້າຕ້ອງຮັກຄວາມເປັນຈິງ, ແລະເວົ້າ ແລະຍອມຮັບສາຣະພາບ ດ້ວຍຄວາມຊື່ສັດ. ໃນຄວາມສາມາດຂອງຕົນເອງ ຂ້າພະເຈົ້າຕ້ອງປົກປັກຮັກສາ ແລະຍ້ອງຍໍຊື່ສຽງ ທີ່ດີຂອງເພື່ອນບ້ານຂອງຂ້າພະເຈົ້າ.

## ວັນແຫ່ງພຣະເຈົ້າ ນີ້ທີ 44

ຖາມ: 113. ຂໍ້ທີ 10 ໄດ້ຮຽກຮ້ອງຫຍັງແດ່ ? 4.113

ຕອບ: ຈະບໍ່ມີຈິດໃຈ ຫຼືການເອນອຽງແມ້ແຕ່ນ້ອຍນຶ່ງ ຫຼືເຮັດທີ່ກົງກັນຂ້າມກັບພຣະບັນຍັດຂອງພຣະເຈົ້າ, ແຕ່ພວກເຮົາ ຈະຕ້ອງກຽດຊັງຄວາມຜິດບາບດ້ວຍຈິດໃຈຂອງເຮົາຢູ່ທຸກເວລາ ແລະຊອກສແວງຫາຄວາມພໍໃຈ ແລະສັນຕິສຸກ ໃນຄວາມຊອບທັມທຸກຢ່າງ.

ຖາມ: 114. ພວກທີ່ປ່ຽນແປງຫາພຣະເຈົ້າ ຈະຮັກສາພຣະບັນຍັດທັງໝົດນີ້ໄດ້ບໍ ? 4.114

ຕອບ: ບໍ່ໄດ້ດອກ. ເຖິງແມ່ນຜູ້ທີ່ຖືວ່າບໍຣິສຸດທີ່ສຸດໃນພວກເຂົາ ກໍສາມາດທຳໄດ້ພຽງຂັ້ນເລີ່ມຕົ້ນເທົ່ານັ້ນ ໃນຊີວິດນີ້. ແນວໃດກໍຕາມ ພວກເຂົາກໍມີເປົ້າໝາຍ ໃນການປະຕິບັດຢ່າງຈິງຈັງ ຊຶ່ງບໍ່ແມ່ນເພື່ອເຮັດໃຫ້ຖືກຕາມຂໍ້ຈຳນວນໃດນຶ່ງເທົ່ານັ້ນ ແຕ່ທັງໝົດຂໍບັນຍັດຂອງພຣະເຈົ້າ

ຖາມ: 115. ຊັ້ນເປັນຫຍັງພຣະເຈົ້າຈຶ່ງໃຫ້ມີຂໍ້ບັນຍັດສິບປະການ ? 4.115

ຕອບ: ອັນທຳອິດ, ໃນຊົ່ວຊີວິດຂອງເຮົາ ພວກເຮົາອາດມີການສັງເກດໃນຄວາມຜິດບາບຂອງເຮົາ, ເພື່ອເຮົາຈະຊອກສແວງ ຫາການອະພັຍໂທດບາບ ແລະຄວາມຊອບທັມຂອງພຣະຄຣິສ. ອັນທີສອງ, ພວກເຮົາຈະໄດ້ອະທິຖານເປັນປະຈຳ ແລະຢ່າງແຂງຂັນຕໍ່ພຣະເຈົ້າ ເພື່ອພຣະຄຸນແຫ່ງພຣະວິນຍານບໍຣິສຸດຂອງພຣະອົງ, ດັ່ງນັ້ນ ເພື່ອເຮົາຈະເປັນຜູ້ທີ່ຖືກສ້າງຂຶ້ນໃໝ່ ເລື້ອຍໆໂດຍພຣະເຈົ້າ ຈົນກວ່າເຮົາຈະໄປເຖິງທີ່ສຳເຣັດຫຼັງຈາກຊີວິດໃນຊາດນີ້.

## ການອະທິຖານ

## ວັນແຫ່ງພຣະເຈົ້າ ນີ້ທີ 45

*ຖາມ:* 116. ເປັນຫຍັງການອະທິຖານຈຶ່ງຈຳເປັນສຳຣັບຄຣິສຕຽນ? 4.116

*ຕອບ:* ເພາະເປັນພາກສ່ວນທີ່ນຳໜ້າ ໃນການສະແດງຄວາມຮູ້ບຸນຄຸນ ຊຶ່ງພຣະເຈົ້າໄດ້ຊົງຮຽກຮ້ອງເຮົາໃຫ້ທຳ. ແລະຍ້ອນວ່າ ພຣະປະສົງຂອງພຣະອົງ ຕ້ອງການທີ່ຈະມອບພຣະວິນຍານບໍຣິສຸດ ແລະພຣະຄຸນຂອງພຣະອົງ ຕໍ່ຜູ້ທີ່ຮ້ອງຂໍຕໍ່ພຣະອົງດ້ວຍ ຄວາມນັບຖື ໂດຍການອະທິຖານຢ່າງບໍ່ຢຸດບໍ່ເຊົາ ແລະຕໍ່ຜູ້ທີ່ຂອບພຣະຄຸນພຣະອົງໃນຂອງພຣະທານນີ້.

*ຖາມ:* 117. ມີຫຍັງ ທີ່ປະກອບຢູ່ໃນການອະທິຖານ ທີ່ຈະເປັນທີ່ພໍພຣະທັຍ ພຣະເຈົ້າ ແລະທີ່ພຣະອົງຈະຊົງຮັບຟັງ ? 4.117

*ຕອບ:* ອັນທຳອິດ, ຄືພວກເຮົາຕ້ອງເອີ້ນຫາພຣະອົງຜູ້ຊົງເປັນພຣະເຈົ້າອົງທ່ຽງແທ້ດ້ວຍຄວາມເຄົາຣົບນັບຖື, ຜູ້ທີ່ຊົງປາກົດ ພຣະອົງເອງຕໍ່ພວກເຮົາໃນພຣະທັມຂອງພຣະອົງນັ້ນ, ໃນທຸກສິ່ງທີ່ພຣະອົງຊົງສັ່ງພວກເຮົາໃຫ້ຂໍຈາກພຣະອົງ. ຈາກນັ້ນ, ພວກເຮົາຈະຕ້ອງຮັບຮູ້ເຖິງຄວາມຕ້ອງການອັນແທ້ຈິງຂອງເຮົາ ແລະສະພາບຄວາມຊົ່ວຮ້າຍ ຊຶ່ງຈະເຮັດໃຫ້ພວກເຮົາຕ້ອງ ຖ່ອມຕົວລົງຕໍ່ການປາກົດຂອງພຣະອົງຜູ້ຊົງຣິດທານຸດພາບ. ອັນທີສາມ, ຄື ພວກເຮົາຈະຕ້ອງຢືນຢັດຢູ່ໃນຄວາມເຊື່ອໝັ້ນວ່າ ພຣະອົງຈະຕ້ອງໄດ້ຍິນຄຳອະທິຖານຂອງພວກເຮົາເພື່ອຜົນປະໂຫຍດຂອງພຣະເຢຊູຄຣິສເຈົ້າຂອງພວກເຮົາ ດັ່ງທີ່ພຣະອົງຊົງ ສັນຍາຕໍ່ພວກເຮົາໃນພຣະທັມຂອງພຣະອົງນັ້ນ.

*ຖາມ:* 118. ພຣະເຈົ້າຊົງສັ່ງໃຫ້ເຮົາຂໍຫຍັງຈາກພຣະອົງ? 4.118

*ຕອບ:* ທຸກສິ່ງທີ່ຈຳເປັນສຳຣັບຊີວິດຈິດວິນຍານ ແລະຮ່າງກາຍຂອງເຮົາ ຊຶ່ງພຣະຄຣິສ ຜູ້ຊົງເປັນພຣະເຈົ້າ ໄດ້ຊົງບອກໄວ້ ໃນຄຳອະທິຖານທີ່ພຣະອົງຊົງສອນພວກເຮົາ.

*ຖາມ:* 119. ຄຳອະທິຖານຂອງພຣະອົງມີຫຍັງແດ່? 4.119

*ຕອບ:* "ຂ້າແດ່ພຣະບິດາຂອງຂ້າພຣະອົງທັງຫຼາຍ ຜູ້ຊົງສະຖິດຢູ່ໃນສວັນ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ ຂໍໃຫ້ຣາຊອານາຈັກຂອງພຣະອົງມາຕັ້ງຢູ່ ຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ ໃນສວັນເປັນຢ່າງໃດກໍໃຫ້ເປັນໄປຢ່າງນັ້ນ ທີ່ແຜ່ນດິນໂລກ ຂໍຊົງໂຜດປະທານອາຫານປະຈຳວັນໃຫ້ແກ່ຂ້າພະອົງໃນກາຣະວັນນີ້ ຂໍຊົງໂຜດຍົກໂທດໃຫ້ແກ່ຂ້າພະອົງ ເໝືອນຂ້າພະອົງຍົກໂທດໃຫ້ແກ່ ຜູ້ທີ່ເຮັດຜິດຕໍ່ຂ້າພະອົງນັ້ນ ແລະຂໍຢ່າພາຂ້າພະອົງເຂົ້າໄປໃນການທົດລອງ ແຕ່ຂໍຊົງໂຜດໃຫ້ພົ້ນ ຈາກການຊົ່ວຮ້າຍ ເຫດວ່າຣາຊອານາຈັກ ຣິດອຳນາດ ແລະພຣະຣັສມີ ກໍເປັນຂອງພຣະອົງສືບໆໄປເປັນນິດ ອາແມນ."

## ຄຳອະທິຖານທີ່ພຣະເຢຊູຊົງສອນ

## ວັນແຫ່ງພຣະເຈົ້າ ນີ້ທີ 46.

*ຖາມ:* 120. ເປັນຫຍັງພຣະຄຣິສຈຶ່ງສັ່ງໃຫ້ເຮົາເອີ້ນພຣະເຈົ້າວ່າ "ພຣະບິດາ" ? 4.120

*ຕອບ:* ເພື່ອການເລີ່ມຕົ້ນໃນການອະທິຖານຂອງພວກເຮົາ ພຣະອົງຈະໄດ້ເຮັດໃຫ້ເຮົາເກີດຄວາມເຄົາຣົບນັບຖື ເໝືອນ ເດັກອ່ອນນ້ອຍນັ້ນ ແລະດ້ວຍຄວາມໄວ້ວາງໃຈໃນພຣະເຈົ້າ ຊຶ່ງຈະເກີດປະສິດທິພາບໃນການອະທິຖານຂອງເຮົາ, ຊຶ່ງພຣະເຈົ້າ ໄດ້ກາຍມາເປັນ ພຣະບິດາຂອງເຮົາ ໂດຍທາງພຣະຄຣິສ ແລະຈະປະຕິເສດພວກເຮົານ້ອຍທີ່ສຸດຕໍ່ສິ່ງທີ່ເຮົາຮ້ອງຂໍຕໍ່ພຣະອົງດ້ວຍ ຄວາມເຊື່ອ ກວ່າພໍ່ທີ່ເປັນມະນຸດຂອງທີ່ຈະປະຕິເສດການຂໍແບບມະນຸດຂອງເຮົາ.

*ຖາມ:* 121. ເປັນຫຍັງຈຶ່ງມີການຕື່ມ "ຜູ້ຊົງສະຖິດໃສວັນ" ເຂົ້າໄປອີກ? 4.121

*ຕອບ:* ເພື່ອພວກເຮົາຈະບໍ່ມີຄວາມຄິດແບບໂລກໆ ຕໍ່ພຣະອົງຜູ້ຊົງຣິດໃນສວັນ, ແຕ່ພວກເຮົາຈະຄອງຄອຍຣິດອຳນາດທີ່ ຢູ່ເໜືອທຸກສິ່ງທີ່ເຮົາຕ້ອງການ ທັ້ງທາງຮ່າຍກາຍ ແລະຈິດວິນຍານ.

## ວັນແຫ່ງພຣະເຈົ້າ ນີ້ທີ 47.

*ຖາມ:* 122. ການອ້ອນວອນອັນທຳອິດຄືຫຍັງ? 4.122

*ຕອບ:* "ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ". ໝາຍຄວາມວ່າ: ກ່ອນອື່ນໝົດ ຂໍຊົງຊ່ວຍພວກເຮົາຮູ້ຈັກພຣະອົງ ຢ່າງຖືກຕ້ອງ, ແລະເພື່ອຄວາມສັກສິດ, ພຣະກຽດ, ແລະການສັຣເສີນພຣະອົງ ໃນທຸກກິຈການຂອງພຣະອົງ ຊຶ່ງໄດ້ສະແດງເຖິງ ຣິດອຳນາດ, ສະຕິປັນຍາ, ຄວາມດີ, ຄວາມຊອບທັມ, ພຣະກະຣຸນາຄຸນ, ແລະຄວາມຈິງຂອງພຣະອົງ. ແລະຊົງໄດ້ສັ່ງໃຫ້ ທັງໝົດຊີວິດຂອງເຮົາໃນດ້ານຄວາມຄິດ, ວາຈາ, ແລະການກະທຳເພື່ອພຣະນາມຂອງພຣະອົງຈະບໍ່ຊົງຖືກດູໝິ່ນຍ້ອນເຮົາ ຈັກເທື່ອ, ແຕ່ຈະຖືກຍ້ອງຍໍສັຣະເສີນຢູ່ທຸກເວລາ.

## *ວັນແຫ່ງພຣະເຈົ້າ ນີ້ທີ 48.*

*ຖາມ:* 123. ການອ້ອນວອນອັນທີສອງຄືຫຍັງ? 4.123

*ຕອບ:* "ຂໍໃຫ້ພຣະຣາຊອານາຈັກຈອງພຣະອົງມາຕັ້ງຢູ່". ເພື່ອວ່າ: ພຣະອົງຈະຊົງປົກຄອງເຮົາດ້ວຍພຣະທັມ ແລະພຣະວິນ ຍານຂອງພຣະອົງ ຊຶ່ງພຣະເຮົາຈະຕ້ອງຍິ່ງມອບກາຍຖວາຍຊີວິດຂອງເຮົາແດ່ພຣະອົງ. ສນັບສນູນ ແລະເສີມຂະຫຍາຍ ຄຣິສຕະຈັກຂອງພຣະອົງ. ທັບມ້າງກິຈການຂອງພີມານ, ອຳນາດທຸກຢ່າງທີ່ຂຶ້ນມາຕໍ່ສູ້ກັບພຣະເຈົ້າ, ແລະຄວາມຄິດທີ່ ຊົ່ວຮ້າຍຕໍ່ສູ້ກັບພຣະທັມຂອງພຣະເຈົ້າ, ຈົນກວ່າພຣະຣາຊອານາຈັກອັນຄົບຖ້ວນຂອງພຣະອົງຈະມາ ຊຶ່ງພຣະອົງຈະຊົງເປັນຜູ້ ປົກຄອງພຽງຜູ້ດຽວ.

## ວັນແຫ່ງພຣະເຈົ້າ ນີ້ທີ 49.

*ຖາມ:* 124. ການອ້ອນວອນອັນທີສາມຄືຫຍັງ? 4.124

*ຕອບ:* "ໃນສວັນເປັນຢ່າງໃດ ກໍໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ". ຊຶ່ງເປັນການ ໃຫ້ພວກເຮົາ ແລະໝົດທຸກຄົນ ຈະໄດ້ ປະຕິເສດກິຈການຂອງຕົນເອງ ແລະເຊື່ອຟັງແລະຂັບຕາງພຣະປະສົງຂອງພຣະອົງ ຊຶ່ງເປັນ

ສິ່ງດຽວທີ່ດີ, ປາສຈາກການສໍ້ໂກງ, ດັ່ງນັ້ນ ທຸກຄົນຈະສາມາດຊື່ນໃຊ້ທ້ອງການຂອງພຣະອົງ ຊຶ່ງໄດ້ເອີ້ນໃຫ້ຮັບເອົາດ້ວຍຄວາມຕ້ອງການ ແລະດ້ວຍຄວາມເຊື່ອໝັ້ນ ໃນຖານະເປັນທູດສວັນໃນແຜ່ນດິນສ້ອນນັ້ນ.

## ວັນແຫ່ງພຣະເຈົ້າ ນີ້ທີ 50

*ຖາມ:* 125. ການອ້ອນວອນອັນທີສາມ ຄືຫຍັງ ? 4.125

*ຕອບ:* "ຂໍຊົງໂຜດປະທານອາຫານປະຈຳວັນໃຫ້ແກ່ຂ້າພະອົງທັງຫຼາຍໃນກາລະວັນນີ້". ຊຶ່ງໝາຍເຖິງ ພຣະອົງຈະຊົງພໍພຣະທັຍໃນການຈັດຫາຕອບສນອງຄວາມຕ້ອງການຂອງເຮົາທາງດ້ານຮ່າງກາຍ ຊຶ່ງຈະເປັນເຫດໃຫ້ເຮົາຮັບຮູ້ ພຣະອົງວ່າເປັນແຫຼ່ງດຽວໃນການດີທຸກຢ່າງ, ແລະຖ້າປາສຈາກການອວຍພອນຈາກພຣະອົງແລ້ວການເບິ່ງແຍງ ແລະການທຳ ງານທຸກຢ່າງຂອງເຮົາກໍຈະບໍ່ມີຫຍັງດີ. ດັ່ງນັ້ນ ເຮົາຈະຕ້ອງຍົກເອົາຄວາມໄວ້ວາງໃຈຂອງເຮົາຕໍ່ສິ່ງຊົງສ້າງທັງໝົດນັ້ນ ມາຫາພຣະອົງພຽງຜູ້ດຽວ.

## ວັນແຫ່ງພຣະເຈົ້າ ນີ້ທີ 51.

*ຖາມ:* 126. ການອ້ອນວອນ ອັນທີ 5 ຄືຫຍັງ ? 4.126

*ຕອບ:* "ແລະຂໍຊົງຍົກໂທດໃຫ້ແກ່ຂ້າພະອົງ ເໝືອນຂ້າພະອົງຍົກໂທດໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້າພະອົງນັ້ນ". ຊຶ່ງເປັນການ ພໍພຣະທັຍ, ເພື່ອຜົນປະໂຫຍດແຫ່ງພຣະໂລຫິດຂອງພຣະຄຣິສ, ໂດຍບໍ່ໃຫ້ໂທດແກ່ເຮົາ ຜູ້ເປັນຄົນຜິດບາບທີ່ໜ້າສົງສານນັ້ນ, ການຜ່າຝືນຢ່າງມາກມາຍຂອງເຮົານັ້ນ, ຫຼືຕໍ່ຄວາມຊົ່ວຮ້າຍທີ່ຍັງເກາະທ້ອຍເຮົາຢູ່. ເຊັ່ນດຽວກັນ ພວກເຮົາກໍພົບກັບ ການເປັນພະຍານໃນສິ່ງນີ້ ໃນພຣະຄຸນຂອງພຣະອົງທີ່ມີຕໍ່ເຮົາ, ຊຶ່ງເປັນສິ່ງທີ່ເຮົາຄວນຈະຍິນດີທີ່ຈະຕັ້ງໃຈ ອະພັຍແກ່ ເພື່ອນບ້ານ ຂອງເຮົາເຊັ່ນກັນ.

## ວັນແຫ່ງພຣະເຈົ້າ ນີ້ທີ 52

*ຖາມ:* 127. ການອ້ອນວອນອັນທີ 6 ຄືຫຍັງ ? 4.127

*ຕອບ:* "ແລະຂໍຢ່າພາຂ້າພະອົງເຂົ້າໄປໃນການທົດລອງ ແຕ່ຂໍຊົງໂຜດໃຫ້ພົ້ນຈາກການຊົ່ວຮ້າຍ". ໝາຍວ່າ, ພວກເຮົາເປັນຜູ້ທີ່ອ່ອນແອ ພວກເຮົາບໍ່ສາມາດຢືນຢັດດ້ວຍຕົນເອງໄດ້, ແລະເຊັ່ນດຽວກັນ, ໃນເມື່ອສັດຕຣູຂອງເຮົາ, ຜີມານ, ໂລກ, ແລະຄວາມຜິດບາບຂອງເຮົາ, ບໍ່ໄດ້ຢຸດເຊົາທີ່ຈະໂຈມຕີເຮົາ, ພວກເຮົາໄດ້ພຣະເຈົ້າໄດ້ໃຫ້ເຫື່ອແຮງແກ່ເຮົາໂດຍທາງ ຣິດເດດແຫ່ງພຣະວິນຍານບໍຣິສຸດ ເພື່ອພວກເຮົາຈະສາມາດຢືນຢັດຕໍ່ສູ້ກັບສິ່ງດັ່ງກ່າວ, ຈະຈະບໍ່ເສັຽໄຊໃນສົງຄາມແຫ່ງ ຈິດວິນຍານຂອງເຮົາ, ຈົນກວ່າເຮົາຈະໄດ້ຮັບໄຊຊະນະໃນບັ້ນທ້າຍນັ້ນ.

*ຖາມ:* 128. ທ່ານປິດທ້າຍການອະທິຖານນີ້ແນວໃດ ? 4.128

*ຕອບ:* "ເຫດວ່າຣາຊອານາຈັກ ຣິດອຳນາດ ແລະພຣະຣັສມີ ກໍເປັນຂອງພຣະອົງສືບໆໄປເປັນນິດ". ໝາຍວ່າ, ພວກເຮົາຂໍຮ້ອງສິ່ງທັງໝົດນີ້ຕໍ່ພຣະອົງເພາະ, ໃນຖານະທີ່ຊົງເປັນເຈົ້າຊີວິດຂອງເຮົາ, ພຣະອົງຈະຊົງພໍພຣະທັຍ ແລະຈະສາມາດ ໃຫ້ສິ່ງທີ່ດີເຫຼົ່ານີ້ແກ່ເຮົາ ທັ້ງນີ້ເພາະພຣະອົງຊົງມີຣິດອຳນາດເໜືອທຸກສິ່ງ,

ຊຶ່ງໂດຍສິ່ງນີ້ ບໍ່ແມ່ນຍ້ອນເຮົາເອງ ແຕ່ຍ້ອນພຣະນາມອັນບໍຣິສຸດຂອງພຣະອົງຈະໄດ້ຖືກຍົກຍ້ອງຕລອດໄປເປັນນິດ.

*ຖາມ:* 129. ຄຳເວົ້າທີ່ວ່າ "ອາແມນ" ມີຄວາມໝາຍຢ່າງໃດ? 4.129

*ຕອບ:* ອາແມນ ໝາຍຄວາມວ່າ ທຸກສິ່ງນັ້ນ ຈະເກີດຂຶ້ນດ້ວຍຄວາມຈິງ ແລະແນ່ນອນ. ເພາະການອະທິຖານຂອງຂ້າພະເຈົ້າ ໄດ້ເຕັມໄປດ້ວຍຄວາມໝັ້ນໃຈວ່າ ພຣະເຈົ້າຈະໄດ້ຍິນ ແລະຂ້າພະເຈົ້າ ໄດ້ຖືກຊັກລູງໃນຈິດໃຈວ່າ ຂ້າພະເຈົ້າປາຖນາສິ່ງເຫຼົ່ານີ້ ຈາກພຣະອົງ.

# *ຈົບ*